ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

12-18 ພຶດສະພາ 2023

ປີທີ 12

ສະບັບທີ 922

ລາຍສັປະດາ

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ

(ສພຊ) ໃນວັນທີ 3 ພຶດສະພາ 2023 ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ລີ ອິນ ຍອງ (Lee In Young) ປະທານຄະນະລັດຖະສະພາເດັກ, ພົນລະເມືອງ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ພົບປະເຮັດວຽກຢູ່ ສປປລາວ ຢ່າງເປັນທາງການ.



ໂອກາດດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນຕໍ່ທ່ານ ລີ ອິນ ຍອງ ພ້ອມຄະນະ ເຊິ່ງເປັນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ ກໍຄື ປະກອບສ່ວນເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືລະຫວ່າງສອງປະເທດ; ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ລາວ-ສ.ເກົາຫຼີ ທີ່ມີມູນເຊື້ອດີງາມ ພວມໄດ້ຮັບການເສີມຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງໄດ້ສະແດງອອກໃນການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນລະດັບຂັ້ນສູງນໍາກັນ ພິເສດ, ທ່ານປະທານປະເທດແຫ່ງສປປລາວຢ້ຽມຢາມ ສ.ເກົາຫຼີ ປີ 2013 ແລະ ປະທານາທິບໍດີ ສ.ເກົາຫຼີ ໄດ້ເດີນທາງມາຢ້ຽມຢາມລັດຖະກິດ ສປປລາວ ໃນເດືອນກັນຍາ 2019. ສອງປະເທດໄດ້ມີການຮ່ວມມືທີ່ດີທາງດ້ານເສດຖະກິດ, ການຄ້າ, ການລົງທຶນ, ສຶກສາ, ສາທາລະນະສຸກ, ທ່ອງທ່ຽວ, ກິລາ ແລະ ອື່ນໆ. ການລົງທຶນຂອງ ສ.ເກົາຫຼີ ຢູ່ ສປປລາວ ຈັດຢູ່ໃນອັນດັບທີ 5 ຂອງການລົງທຶນຂອງຕ່າງປະເທດ ເປັນຕົ້ນລົງທຶນໃນຂະແໜງພະລັງງານໄຟຟ້າ, ການກໍ່ສ້າງ, ການບໍລິການ, ກະສິກໍາ, ອຸດສາຫະກໍາ ແລະ ຫັດຖະກໍາ, ການທ່ອງທ່ຽວ, ໂຮງແຮມ ແລະ ຮ້ານອາຫານ, ທະນາຄານ ແລະ ອື່ນໆ; ການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ ໄດ້ຮັບການຂະຫຍາຍຕົວເປັນຢ່າງດີ ແລະ ຕໍ່ເນື່ອງ ເຊິ່ງສະແດງອອກມີການແລກປ່ຽນຢ້ຽມຢາມເຊິ່ງກັນແລະກັນ ໃນລະດັບປະທານສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ



ສພຊ ອັດຕະປື ທາບທາມ...

(ໜ້າ 7)



ທາວຽດນາມ ກະກຽມກົດໝາຍ...

(ໜ້າ 11)



ຢ່າປ່ອຍໃຫ້ເດັກນ້ອຍເສບຕິດ...

(ໜ້າ 12)

## ສໍາເລັດກອງປະຊຸມສໍາມະນາວິທະຍາສາດ ການນໍາຂັ້ນສູງ




(ສພຊ) ວັນທີ 5 ພຶດສະພາ 2023 ຢູ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ສໍາເລັດກອງປະຊຸມສໍາມະນາວິທະຍາສາດ ການນໍາຂັ້ນສູງ ໃນຫົວຂໍ້: ເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໂດຍການເປັນປະທານຮ່ວມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ສຈ. ປອ. ກິແກ້ວ ໄຂຄໍາພິທູນ ຮອງນາຍົກລັດຖະຕີ; ມີບັນດາທ່ານປະທານ-ຮອງປະທານກໍາມາທິການ, ລັດຖະມົນຕີ-ຮອງລັດຖະມົນຕີ, ເຈົ້າຄອງນະຄອນຫຼວງວຽງຈັນ,

ອ່ານຕໍ່ໜ້າ 4

## ນັກສຶກສາເທິດສະດີຂັ້ນຕົ້ນ ແລກປ່ຽນບົດຮຽນກັບອົງການປົກຄອງແຂວງບໍລິຄໍາໄຊ

(ສພຊ) ຄະນະນັກສຶກສາທິດສະດີຂັ້ນຕົ້ນ ຂອງສະພາແຫ່ງຊາດ ໄດ້ພົບປະແລກປ່ຽນບົດຮຽນ ກັບອົງການປົກຄອງແຂວງບໍລິຄໍາໄຊ ໃນວັນທີ 5 ພຶດສະພາຜ່ານມາ, ຢູ່ຫ້ອງປະຊຸມຂອງແຂວງບໍລິຄໍາໄຊ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ນາງ ປິ່ງຄໍາ ລາຊະສິມມາກໍາມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ແລະ ທ່ານ ບຸນຄໍາ ໄຊເຍ່ຍລໍ



ວໍ ຄະນະປະຈໍາພັກແຂວງ, ປະທານແນວລາວສ້າງຊາດແຂວງ. ມີບັນດາສະຫາຍຄະນະຮັບຜິດຊອບ, ຄູອາຈານຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດ ທີ່ມາຈາກສູນກາງ ແລະ ພະນັກງານຫຼັກແຫຼ່ງຂອງແຂວງເຂົ້າຮ່ວມ.

ອ່ານຕໍ່ໜ້າ 4

## ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານເຂດເສດຖະກິດ ຢູ່ແຂວງເຊກອງ



(ສພຊ) ວັນທີ 7 ພຶດສະພາຜ່ານມາ, ທ່ານ ຮສ. ປອ. ລິນຄໍາ ດວງສະຫວັນ ກໍາມະການສໍາຮອງສູນກາງພັກ, ກໍາມະການຄະນະປະຈໍາສະພາແຫ່ງຊາດ, ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານເຂດເສດຖະກິດ ຢູ່ແຂວງເຊກອງ ໂດຍສະເພາະການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ພົວພັນກັບໂຄງການເຂື່ອນໄຟຟ້າເຊຂະໝານ 3; ໂຄງການໄຟຟ້າພະລັງງານລົມ ມອນຊູນ ແລະ ການຈັດຕັ້ງປະຕິບັດວຽກງານ

ອ່ານຕໍ່ໜ້າ 4

## ພົບປະສອງຝ່າຍລາວ-ໄທ




(ສພຊ) ວັນທີ 8 ພຶດສະພາ 2023 ທີ່ສະພາແຫ່ງຊາດລາວ ໄດ້ມີການພົບປະສອງຝ່າຍລາວ-ໄທ ເຊິ່ງຝ່າຍລາວນໍາໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກໍາມາທິການວັດທະນະທໍາ-ສັງຄົມ ສະພາແຫ່ງຊາດລາວ ແລະ ຝ່າຍໄທນໍາໂດຍທ່ານເຈດສິຣາທຣານິນ ປະທານກໍາມາທິການສາທາລະນະສຸກ ວຸດທິສະພາ ແຫ່ງ ລາຊະອານາຈັກໄທ ໂດຍມີຄະນະຜູ້ແທນທັງສອງຝ່າຍເຂົ້າຮ່ວມ.

ທັງນີ້, ເພື່ອເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ

ອ່ານຕໍ່ໜ້າ 4

## ຫາລືກ່ຽວກັບ ການຈັດງານວັນເດັກນ້ອຍສາກົນ



(ສພຊ) ເພື່ອເປັນການກຽມຄວາມພ້ອມດ້ານຕ່າງໆ ໃນການຈັດງານວັນເດັກນ້ອຍສາກົນ ທີ່ສະພາແຫ່ງຊາດ ໃຫ້ມີບັນຍາກາດ ແລະ ເປັນປະໂຫຍດແກ່ຫຼານນ້ອຍທີ່ຈະມາຮ່ວມງານໃຫ້ຫຼາຍທີ່ສຸດ ໃນວັນທີ 5 ພຶດສະພາ 2023 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບການຈັດງານວັນເດັກນ້ອຍສາກົນ ວັນທີ 1 ມິຖຸນາ 2023 ໂດຍການເປັນປະທານຂອງທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ, ເຂົ້າຮ່ວມມີປະທານສະຫະພັນກໍາມະບານ

ອ່ານຕໍ່ໜ້າ 3

## ຮອງປະທານ...

(ຕໍ່ຈາກໜ້າ 1)

ລະດັບປະທານກຳມາທິການ ແລະ ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫຼີ; ພ້ອມນີ້, ທ່ານຮອງປະທານສະພາແຫ່ງຊາດລາວ ສະເໜີໃຫ້ສອງອົງການນິຕິບັນຍັດຂອງສອງປະເທດ ສືບຕໍ່ພົວພັນຮ່ວມມືແລກປ່ຽນຄຳຄິດຄຳເຫັນນຳກັນໃຫ້ຫຼາຍຂຶ້ນ ໂດຍສະເພາະແມ່ນການແລກປ່ຽນຄະນະຜູ້ແທນລະດັບຂັ້ນສູງນຳກັນຢ່າງເປັນປົກກະຕິ, ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດສັນຍາ, ສົນທິສັນຍາ, ຂໍ້ຕົກລົງຕ່າງໆ ທີ່ສອງລັດຖະບານໄດ້ລົງນາມຮ່ວມກັນ. ຖືໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານແລະປະຊາຊົນສ.ເກົາຫຼີ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປລາວ ໃນໄລຍະຜ່ານມາເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດຂອງ ສປປລາວ; ຊຸກຍູ້ໃຫ້ນັກລົງທຶນ ແລະ ນັກທ່ອງທ່ຽວຂອງ ສ.ເກົາຫຼີ ໃຫ້ຫຼາຍຂຶ້ນ.



ໃນໂອກາດນີ້, ທ່ານ ລີ ອິນ ຍອງ ກໍໄດ້ກ່າວສະແດງຄວາມຂອບໃຈຢ່າງຍິ່ງທີ່ທ່ານຮອງປະທານສະພາແຫ່ງຊາດໄດ້ສະຫຼະເວລາອັນມີຄຸນຄ່າໃຫ້ກຽດຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງໃຫ້ຮູ້ກ່ຽວກັບການພົບປະເຮັດວຽກຮ່ວມກັບສອງກຳມາທິການ ຄື: ກຳມາທິການການຕ່າງປະເທດ ແລະ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມທັງເຫັນດີນຳຄຳຄິດຄຳເຫັນ ແລະ ຂໍ້ສະເໜີຕ່າງໆຂອງຝ່າຍລາວ ແລະ ຈະນຳເອົາໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອສືບຕໍ່ປະຕິບັດໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ; ພ້ອມນີ້, ທ່ານ ລີ ອິນ ຍອງ ຍັງໄດ້ແຈ້ງໃຫ້ທ່ານຮອງປະທານສະພາແຫ່ງຊາດ ຊາບວ່າ: ຈຸດປະສົງຂອງການຢ້ຽມຢາມແມ່ນເປັນການສືບຕໍ່ແລກປ່ຽນການຢ້ຽມຢາມກັນ ລະຫວ່າງ ອົງການນິຕິບັນຍັດ ແລະ ທັງເປັນການແຈ້ງໃຫ້ຊາບວ່າສະພາແຫ່ງຊາດ ສ.ເກົາຫຼີ ຈະເປັນເຈົ້າພາບກອງປະຊຸມລັດຖະສະພາອາຊີປາຊີຟິກ ວ່າດ້ວຍການຮັກສາສິ່ງແວດລ້ອມ ຄັ້ງທີ 20 (APPCED-20) ຢູ່ເຊອູນ ສ.ເກົາຫຼີ. ສະນັ້ນ, ຈຶ່ງສະແດງຄວາມຫວັງວ່າຈະໄດ້ຕ້ອນຮັບຄະນະຜູ້ແທນຈາກສະພາແຫ່ງຊາດລາວເຂົ້າຮ່ວມ ສ່ວນບັດເຊີນທາງການໄດ້ສົ່ງຜ່ານທາງການທູດ, ພ້ອມຕີລາຄາໃຫ້ເຫັນວ່າການທີ່ໂລກ ແລະ ພາກພື້ນປະເຊີນນຳກັນ ການລະບາດຂອງພະຍາດໂຄວິດ-19 ທີ່ຜ່ານມາແມ່ນຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ ແລະ ສິ່ງແວດລ້ອມຂອງໂລກ; ນອກຈາກນີ້, ຫົວໜ້າຄະນະຍັງຢືນຢັນຈະນຳເອົາຄຳເຫັນຂອງທ່ານຮອງປະທານສະພາແຫ່ງຊາດລາວ ໄປລາຍງານໃຫ້ການນຳຂອງສະພາແຫ່ງຊາດ ສ.ເກົາຫຼີ ຊາບ ແລະ ເຊື່ອໝັ້ນວ່າຄະນະຜູ້ແທນ ສ.ເກົາຫຼີ ຈະເຂົ້າຮ່ວມກອງປະຊຸມ AIPA-45 ທີ່ ສປປລາວ ເປັນເຈົ້າພາບໃນປີ 2024.

ໃນວັນດຽວກັນ, ທ່ານ ລີ ອິນ ຍອງ ພ້ອມດ້ວຍຄະນະຍັງໄດ້ພົບປະເຮັດວຽກຮ່ວມກັບທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດແລະທ່ານຮສ.ປອ.ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ ເຊິ່ງທັງສອງຝ່າຍໄດ້ຢືນຢັນສາຍພົວພັນມິດຕະພາບສອງປະເທດ ແລະ ສອງອົງການນິຕິບັນຍັດ; ພ້ອມນີ້, ທັງສອງຝ່າຍຍັງໄດ້ປຶກສາຫາລືກ່ຽວກັບແຜນການຢ້ຽມຢາມ ສ.ເກົາຫຼີ ຂອງປະທານຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫຼີ ໃນທ້າຍເດືອນພຶດສະພາ 2023 ນີ້ ເຊິ່ງຫົວໜ້າຄະນະຜູ້ແທນ ສ.ເກົາຫຼີ ໄດ້ຢືນຢັນຈະຊຸກຍູ້ຕາມພາລະບົດບາດຂອງຕົນ ເພື່ອໃຫ້ການເຄື່ອນໄຫວໄດ້ຮັບຜົນສຳເລັດຢ່າງຈົບງາມ.

**(ສອນສັກ ວັນວິໄຊ)**



## ເລື່ອງເດັ່ນ ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❒ ປີ 2023 ກະຊວງກະສິກຳ ແລະ ປ່າໄມ້ ຈະສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ໄດ້ 3.810.000 ໂຕນ. ໃນນັ້ນ, ເຂົ້ານາປີ 3.189.950 ໂຕນ, ເຂົ້ານາແຊງ 441.850 ໂຕນ ແລະ ເຂົ້າໄຮ່ 178.200 ໂຕນ ໂດຍສຸມໃສ່ 10 ແຂວງທີ່ເປັນເປົ້າໝາຍ ໂດຍສະເພາະແມ່ນແຂວງຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ແຂວງຈຳປາສັກ ແມ່ນເລັ່ງໃສ່ຜະລິດ ເພື່ອຄ້ຳປະກັນໃຫ້ແກ່ບັນດາແຂວງພາກກາງ ແລະ ພາກໃຕ້ແລະເປັນສິນຄ້າສົ່ງອອກ. ສຳລັບແຂວງໄຊຍະບູລີ, ຫລວງນ້ຳທາ ແລະ ແຂວງບໍ່ແກ້ວ ແມ່ນເລັ່ງໃສ່ຜະລິດເຂົ້າເພື່ອສະໜອງໃຫ້ແກ່ບັນດາແຂວງພາກເໜືອ, ສ່ວນນະຄອນຫລວງວຽງຈັນ, ແຂວງວຽງຈັນແລະແຂວງບໍລິຄຳໄຊແມ່ນເລັ່ງໃສ່ຜະລິດ ເພື່ອສະໜອງໃຫ້ແກ່ນະຄອນຫລວງວຽງຈັນ ແລະບັນດາແຂວງພາກເໜືອຈຳນວນໜຶ່ງລວມທັງເປັນສິນຄ້າສົ່ງອອກ.*

***ໜສພ. ປະເທດລາວ 08/05/2023***

*❒ ສະມາພັນຄວບຄຸມຢາສູບອາຊຽນ ໄດ້ລາຍງານໃຫ້ຊາບເມື່ອບໍ່ດົນມານີ້ວ່າ: ຢາສູບໄຟຟ້າມີຄວາມອັນຕະລາຍຫຼາຍກວ່າຢາສູບທຳມະດາ ຍ້ອນການເສບນິໂກຕິນສົດໆ ເຊິ່ງຢາສູບຊະນິດນີ້ເຮັດໃຫ້ຜູ້ສູບຕິດນິໂກຕິນເພີ່ມຂຶ້ນ ໃນຢາສູບຊະນິດນີ້ຍັງມີສານກໍ່ມະເຮັງ ແລະ ສານອັນຕະລາຍອື່ນໆ ກົງກັນຂ້າມກັບອັດຕາການສູບຢາທຳມະດາໃນທົ່ວໂລກແມ່ນນັບມື້ຫຼຸດລົງ ອີງຕາມການວິໄຈໃຫ້ຮູ້ວ່າ: ເກືອບ 1 ໃນ 4 ຂອງໜູທົດລອງເປັນມະເຮັງປອດ ຫຼັງສູດດົມຢາສູບໄຟຟ້າ 1 ປີ ແລະ ພົບວ່າຢາສູບໄຟຟ້າມີຄວາມສ່ຽງເປັນມະເຮັງສູງກວ່າຢາສູບທຳມະດາ 2,2 ເທົ່າ ແລະ ຍັງສ່ຽງເປັນພະຍາດປອດເຂົ້າຕອກແຕກ ເຊິ່ງແພດຈາກມະຫາວິທະຍາໄລ John Hopkins ເປີດເຜີຍວ່າ 95% ຂອງຄົນເຈັບທີ່ເປັນພະຍາດດັ່ງກ່າວມີສາເຫດຈາກການສູບຢາໄຟຟ້າ ແລະ ຈະເສຍຊີວິດພາຍໃນ 5 ປີ ນອກນີ້, ຍັງສ່ຽງເປັນພະຍາດປອດຮົ່ວ ແລະ ພະຍາດອື່ນໆອີກ.*

***ໜສພ. ວຽງຈັນໃໝ່ 09/05/2023***

*❒ ລັດວິສາຫະກິດຫວຍພັດທະນາ ໃຫ້ຮູ້ວ່າ: ການເຄື່ອນໄຫວດຳເນີນທຸລະກິດຂາດຕົວ ປະຈຳປີ 2022 ແລະດ້ານລາຍຮັບ ປີ 2022 ປະຕິບັດໄດ້ເທົ່າກັບ 355,93 ຕື້ກີບ ຫຼື ເທົ່າກັບ 150,81% ຂອງແຜນການປີ 2022 ລື່ນແຜນການປີ 50,81% ມອບພັນທະງົບປະມານໃຫ້ລັດ 218,80 ຕື້ກີບ ຫຼື ເທົ່າກັບ 157,16% ຂອງແຜນການ ລື່ນແຜນການປີ 57,16%. ສຳລັບການເຄື່ອນໄຫວດຳເນີນທລະກິດປະຈຳງວດ I (3 ເດືອນຕົ້ນປີ 2023) ດ້ານລາຍຮັບປະຕິບັດໄດ້ 116,21 ຕື້ກີບ ຫຼື ເທົ່າກັບ 130,24% ຂອງແຜນການລື່ນແຜນການປີ 30,24% ມອບພັນທະໃຫ້ລັດ 57,61 ຕື້ກີບ ຫຼື ເທົ່າກັບ 146,48% ຂອງແຜນການ ລື່ນແຜນການປີ 46,48%.*

***ໜສພ. ວຽງຈັນໃໝ່ 09/05/2023***

*❒ ມູນຄ່າການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງ ສປປລາວປະຈຳເດືອນເມສາ2023ບັນລຸໄດ້ປະມານ947 ລ້ານໂດລາ. ໃນນີ້, ມູນຄ່າການສົ່ງອອກ ປະມານ 465 ລ້ານໂດລາ, ມູນຄ່າການນຳເຂົ້າ ປະມານ 482 ລ້ານໂດລາ, ເຮັດໃຫ້ ສປປລາວ ຂາດດູນການຄ້າ ປະມານ 17 ລ້ານໂດລາ, ໃນນີ້ຍັງບໍ່ລວມເອົາການສົ່ງອອກແລະນຳເຂົ້າໄຟຟ້າ; ສິນຄ້າທີ່ ສປປລາວ ສົ່ງອອກຫຼາຍກວ່າໝູ່ແມ່ນຄຳປະສົມ, ຄຳແທ່ງ, ເກືອກາຣີ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແຮ່ທອງ, ແຮ່ເຫຼັກ, ມັນຕົ້ນແລະອື່ນໆ; ສ່ວນສິນຄ້າທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນນ້ຳມັນກາຊວນ, ພາຫະນະທາງບົກ, ອຸປະກອນກົນຈັກ, ນ້ຳມັນແອັດຊັງ, ເຫຼັກແລະເຄື່ອງທີ່ເຮັດດ້ວຍເຫຼັກແລະອື່ນໆ.*

***ໜສພ. ປະຊາຊົນ 10/05/2023***

# ສະຫະພັນກຳມະບານສະພາແຫ່ງຊາດ ໄດ້ຮັບການໜັບສະໜູນຊຸດກິລາ 100 ຊຸດ



(ສພຊ) ວັນທີ 5 ພຶດສະພາ 2023 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບ ຊຸດກິລາ ຈາກຫ້ອງການທະນາຄານ ແຫ່ງ ສປປລາວ ໃຫ້ແກ່ສະຫະພັນກຳມະບານສະພາແຫ່ງຊາດ ຈຳນວນ 100 ຊຸດ ແລະ ເງິນສົດ ຈຳນວນ 20 ລ້ານກວ່າກີບ ລວມເປັນມູນຄ່າທັງໝົດ 32 ລ້ານກວ່າກີບ ໂດຍການກ່າວມອບຂອງທ່ານ ສຸກັນ ຈັນທະວົງ ຮອງຫົວໜ້າຫ້ອງການທະນາຄານ ແຫ່ງ ສປປລາວ ແລະ ກ່າວຮັບໂດຍທ່ານ ອຳໄພ ຈິດມານິນ ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ທັງເປັນຮອງປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຈາກຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ແລະ ຫ້ອງການທະນາຄານ ແຫ່ງ ສປປລາວ ເຂົ້າຮ່ວມເປັນສັກຂີພິຍານ.

ໂອກາດດັ່ງກ່າວ, ທ່ານ ອຳໄພ ຈິດມານິນ ໄດ້ກ່າວສະແດງຄວາມຂອບໃຈທີ່ທາງຫ້ອງການທະນາຄານ ແຫ່ງ ສປປລາວ ໄດ້ປະກອບສ່ວນໃຫ້ການສະໜັບສະໜູນໃນຄັ້ງນີ້ ເຊິ່ງຊຸດກິລາ ແລະ ເງິນຈຳນວນດັ່ງກ່າວ ແມ່ນຈະໄດ້ນຳໃຊ້ເຂົ້າໃນການສ້າງຂະບວນການແຂ່ງຂັນກິລາບານເຕະ ລະຫວ່າງບັນດາອົງການຈັດຕັ້ງມະຫາຊົນຂອງ 4 ກະຊວງ ທີ່ຈະໄດ້ຈັດຂຶ້ນໃນມໍ່ໆນີ້.

**(ສຸພາວັນ ທອມສະນິດ)**



## ຫາລື...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ, ມີບັນດາທ່ານໃນຄະນະກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ, ຕາງໜ້າຈາກໂຮງໝໍກະເສມລາດ, ຕາງໜ້າຈາກທະນາຄານພົງສະຫວັນ ແລະ ພາກສ່ວນກ່ຽວຂ້ອງ.

ພາຍໃນງານດັ່ງກ່າວ, ແມ່ນຈະມີຫຼາກຫຼາຍກິດຈະກຳເປັນຕົ້ນ: ການປອດຢາ, ຖາມ-ຕອບ ເພື່ອຮັບລາງວັນ, ມີການແຈກຢາຍເຂົ້າໜົມ ແລະ ຂອງຂວັນໃຫ້ຫຼານນ້ອຍ, ມີການສະແດງສິລະປະວັນນະຄະດີ ແລະ ທ່ຽວຊົມຫ້ອງປະຊຸມ ແລະ ຫໍມູນເຊື້ອຂອງສະພາແຫ່ງຊາດຕື່ມອີກ.

**(ກົງທະນູຄຳ ພິພັດເສລີ)**




# ຍົກສູງຂີດຄວາມສາມາດ ການຕິດຕາມກວດກາວຽກງານຍຸຕິທຳ



(ສພຊ) ເພື່ອເຮັດໃຫ້ການຕິດຕາມກວດກາວຽກງານໃນຂົງເຂດຍຸຕິທຳ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີໝາກຜົນ ຈຶ່ງມີຄວາມຈຳເປັນເພີ່ມທະວີ ແລະ ຍົກສູງຄຸນນະພາບຂອງສະມາຊິກສະພາແຫ່ງຊາດທີ່ສັງກັດກຳມາທິການຍຸຕິທຳ ໃຫ້ຮັບຮູ້, ເຂົ້າໃຈ ແລະ ສາມາດປະຕິບັດພາລະບົດບາດຕິດຕາມກວດກາ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນໄດ້ເປັນຢ່າງດີ; ຍົກສູງຂີດຄວາມສາມາດຂອງພະນັກງານ-ລັດຖະກອນ ຂອງກຳມາທິການຍຸຕິທຳ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ການຄົ້ນຄວ້າ, ເກັບກຳຂໍ້ມູນ, ວິເຄາະວິໄຈ ແລະ ສະໜອງຂໍ້ມູນກ່ຽວກັບການຕິດຕາມກວດກາວຽກງານຍຸຕິທຳ ໃຫ້ແກ່ຄະນະກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໃນການປະກອບຄຳເຫັນ, ຊັກຖາມໃນທີ່ປະຊຸມ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ໃນການຕິດຕາມກວດກາມີຜົນສັກສິດຍິ່ງຂຶ້ນ.

ໃນລະຫວ່າງວັນທີ 8-9 ພຶດສະພາ 2023 ທີ່ແຂວງໄຊຍະບູລີ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສຳມະນາຍົກສູງຂີດຄວາມສາມາດໃນການຕິດຕາມກວດກາວຽກງານຍຸຕິທຳ ໂດຍການເປັນປະທານຮ່ວມລະຫວ່າງທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳສະພາແຫ່ງຊາດ ແລະ ທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ; ເຂົ້າຮ່ວມມີທ່ານເລຂາທິການສະພາປະຊາຊົນແຂວງໄຊຍະບູລີ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງສັງກັດກຳມາທິການຍຸຕິທຳ ຈາກ 11 ແຂວງ ຄື: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ວຽງຈັນ ແລະ ໄຊສົມບູນ ພ້ອມດ້ວຍແຂກຖືກເຊີນ; ກອງປະຊຸມດັ່ງກ່າວ, ໄດ້ຮັບການສະໜັບສະໜູນທຶນຈາກໂຄງການຊ່ວຍເຫຼືອຂອງມູນນິທິເວສມິນສະເຕີ (WFD).

ກອງປະຊຸມ, ໄດ້ຮັບຟັງການສະເໜີບົດການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ການຕິດຕາມກວດກາວຽກງານຍຸຕິທຳ, ການສະເໜີບົດການຄົ້ນຄວ້າການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລາກອນຂອງສານປະຊາຊົນ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງສ້າງສັນ, ມີຈຸດສຸມ ແລະ ກົງໄປກົງມາ; ກອງປະຊຸມ ຍັງໄດ້ແລກປ່ຽນບົດຮຽນ ແລະ ປະສົບການຂອງບາງເຂດເລືອກຕັ້ງ ໃນການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາຂອງຄະນະກຳມະການຍຸຕິທຳ, ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ແລກປ່ຽນບົດຮຽນການຕິດຕາມກວດກາໂດຍຜ່ານຄຳຮ້ອງຂໍຄວາມເປັນທຳ.

ໃນໂອກາດນີ້, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ກອງປະຊຸມສຳມະນາຍົກສູງຂີດຄວາມສາມາດ ໃນການຕິດຕາມກວດກາວຽກງານຍຸຕິທຳຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ເຊິ່ງບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເຫັນວ່າມີຄວາມໝາຍສຳຄັນ ເຖິງວ່າຈະມີເວລາຈຳກັດ; ສະນັ້ນ, ເພື່ອເຮັດໃຫ້ບັນດາເນື້ອໃນຂອງກອງປະຊຸມໄດ້ຮັບພິຈາລະນາ, ຄົ້ນຄວ້າຢ່າງເລິກເຊິ່ງ ຮຽກຮ້ອງມາຍັງບັນດາທ່ານຄະນະນຳ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມ ຈົ່ງນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ຕໍ່ກັບບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມໃນຄັ້ງນີ້ຢ່າງກົງໄປກົງມາ, ມີເຫດມີຜົນ ເພື່ອເຮັດໃຫ້ບັນດາເນື້ອໃນຕ່າງໆນັ້ນສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າ ໃຫ້ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ.

**(ກຸກກົກ ບຸດດາໄຊ)**



## ສຳເລັດ...

(ຕໍ່ຈາກໜ້າ 1)



ຕາງໜ້າຄະນະເລຂາທິການ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ເຊິ່ງກອງປະຊຸມມີສອງຮູບແບບຄື: ແບບອອນລາຍ ແລະ ກັບທີ່ ສ່ວນບັນດາທ່ານເຈົ້າແຂວງຫົວພັນ, ແຂວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ ເຂົ້າຮ່ວມໃນຮູບແບບອອນລາຍ.

ທັງນີ້, ກໍເພື່ອຈັດຕັ້ງປະຕິບັດຕາມແຜນການເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປະກອບສ່ວນເຂົ້າໃນການປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຂໍ້ຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ບັນລຸຕາມແຜນ ກໍຄືການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ຂະຫຍາຍຕົວຕາມທິດມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ເຊິ່ງເປັນເປົ້າໝາຍທີ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທີ່ໄດ້ກຳນົດໃນແຜນ 5 ປີ ຄັ້ງທີ IX (2021-2025)ເວົ້າລວມ,ເວົ້າສະເພາະແມ່ນປະຕິບັດການຈັດສັນງົບປະມານລົງທຶນຂອງລັດໃຫ້ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ໃຫ້ມີຜົນສັກສິດ ແລະ ມີປະສິດທິພາບ ທັນເວລາພິຈາລະນາຮັບຮອງຢູ່ກອງປະຊຸມສະພາແຫ່ງຊາດ ແລະ ຈັດຕັ້ງປະຕິບັດຕາມແຜນງົບປະມານປະຈຳປີ ໃຫ້ມີຜົນສັກສິດ ຕາມທີ່ໄດ້ກຳນົດໃນກົດໝາຍ ກໍຄືການສ້າງແຜນການລົງທຶນຂອງລັດໃຫ້ສອດຄ່ອງຕາມຄວາມສາມາດສະໜອງແຫຼ່ງທຶນຕົວຈິງ; ການຈັດສັນງົບປະມານຕົວຈິງຮັບປະກັນຄວາມຍຸຕິທຳ,ມີຈຸດສຸມ, ເປັນບູລິມະສິດ, ມີການກະຈາຍແລະການດຸນດ່ຽງການລົງທຶນ ລະຫວ່າງຂະແໜງການສູນກາງ ແລະ ທ້ອງຖິ່ນ ແລະ ລະຫວ່າງເຂດແຄວ້ນ ໃຫ້ສົມເຫດສົມຜົນ; ປັບປຸງຫຼັກການ ແລະ ກົນໄກການຈັດສັນງົບປະມານໃຫ້ຈະແຈ້ງ, ມີຄວາມໂລ່ງລ່ຽນ ແລະ ນຳໃຊ້ເຕັກນິກການຈັດສັນງົບປະມານໃຫ້ທັນສະໄໝຫຼາຍຂຶ້ນ.

ກອງປະຊຸມ, ໄດ້ຮັບຟັງການລາຍງານຜົນກອງປະຊຸມສຳມະນາວິທະຍາສາດ ຂັ້ນວິຊາການ ຄັ້ງວັນທີ 2-3 ພຶດສະພາ 2023 ຈາກທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ ແລະ ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ປະກອບຄຳຄິດຄຳເຫັນຕໍ່ຜົນກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບການເພີ່ມທະວີການຄຸ້ມຄອງການລົງທຶນຂອງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຊອກຫາທິດທາງ ແລະ ວິທີການແກ້ໄຂຂໍ້ຄົງຄ້າງ ເພື່ອເປັນການປະກອບສ່ວນໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດໃນການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

**(ກຸກກີກ ບຸດດາໄຊ)**

## ນັກສຶກສາ...

(ຕໍ່ຈາກໜ້າ 1)

ໃນພິທີ, ທ່ານ ສົມໃຈ ຄຸນພະໄຊ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການແຂວງບໍລິຄຳໄຊ ຕາງໜ້າໃຫ້ກັບຄະນະນຳຂອງແຂວງ ໄດ້ກ່າວສະແດງການຕ້ອນຮັບຢ່າງອົບອຸ່ນພ້ອມທັງຕີລາຄາສູງຕໍ່ກັບການລົງມາເຄື່ອນໄຫວເຮັດວຽກຂອງຄະນະນຳ ແລະ ນັກສຶກສາທິດສະດີຂັ້ນຕົ້ນ ຂອງ ສພຊ ພ້ອມດ້ວຍຄະນະ; ພ້ອມນັ້ນ, ທ່ານຍັງໄດ້ລາຍງານສະພາບລວມໂດຍຫຍໍ້ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະໃຫ້ກັບບັນດາຜູ້ເຂົ້າຮ່ວມໄດ້ຮັບຊາບວ່າ: ວິໄສທັດໃນການພັດທະນາແຂວງບໍລິຄຳໄຊ ແຕ່ປີ 2016-2030 ໄດ້ຜັນຂະຫຍາຍອອກເປັນຍຸດທະສາດການພັດທະນາໃນດ້ານຕ່າງໆ ແລະ ໄດ້ກຳນົດເວລາໃນການປະຕິບັດໄວ້ເປັນ 2 ໄລຍະຄື: ຍຸດທະສາດການພັດທະນາໃນໄລຍະທີ 1: 2016-2025 ແລະ ໄລຍະທີ 2: 2026-2030 ພາຍຫຼັງສຳເລັດການປະຕິບັດຍຸດທະສາດໄລຍະທີ 1 ແລ້ວ ຈຶ່ງຈະໄດ້ກຳນົດທິດທາງ ແລະ ເປົ້າໝາຍລະອຽດຂອງຍຸດທະສາດໄລຍະທີ 2, ການຈັດຕັ້ງປະຕິບັດເປົ້າໝາຍຂອງວິໄສທັດການພັດທະນາແຂວງບໍລິຄຳໄຊ ຕາມຍຸດທະສາດທີ່ກຳນົດໄວ້ນັ້ນ ໄດ້ຖືກຜັນຂະຫຍາຍອອກມາເປັນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງບໍລິຄຳໄຊ ຄັ້ງທີ 4 (2016-2020) ແລະ ຄັ້ງທີ 5 (2021-2025) ເຊິ່ງກຳລັງຈັດຕັ້ງປະຕິບັດກັນຢູ່, ສ່ວນຍຸດທະສາດໃນໄລຍະ 2 ກໍຈະຖືກຜັນຂະຫຍາຍອອກມາເປັນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 6 (2026-2030) ໃນຂັ້ນຕໍ່ໄປ.

ແຂວງບໍລິຄຳໄຊ ເປັນແຂວງອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ແຮ່ທາດຫຼາຍຢ່າງ ແລະ ມີພື້ນທີ່ປ່າໄມ້ທີ່ຂຽວສົດງົດງາມ ກວມ 64% ຂອງເນື້ອທີ່ທັງໝົດ, ມີແຫຼ່ງນ້ຳ, ຫ້ວຍຮ່ອງ-ໜອງບຶງນ້ອຍ-ໃຫຍ່ ແລະ ເປັນສາຂາແມ່ນ້ຳຂອງທີ່ສາມາດສ້າງເຂື່ອນພະລັງງານໄຟຟ້ານ້ຳຕົກ ແລະ ລະບົບຊົນລະປະທານ; ດິນຍັງອຸດົມສົມບູນ, ງອກງາມ, ອາກາດຊຸ່ມຊື່ນຕະຫຼອດປີ ເໝາະສຳລັບການຜະລິດກະສິກຳປູກຝັງ-ລ້ຽງສັດ; ມີແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດຫຼາຍແຫ່ງ ຈາກເງື່ອນໄຂທ່າແຮງທາງດ້ານທີ່ຕັ້ງຂອງແຂວງ ຈຶ່ງໄດ້ກຳນົດວິໄສທັດໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງແຕ່ປີ 2016-2030 ຄືພັດທະນາແຂວງບໍລິຄຳໄຊ ໃຫ້ກາຍເປັນປະຕູເສດຖະກິດ ເປັນແຫຼ່ງຜະລິດພະລັງງານ ພັດທະນາແຂວງບໍລິຄຳໄຊ ໃຫ້ກາຍເປັນສູນກາງການບໍລິການທາງຜ່ານ ແລະ ຄຸ້ມຄອງສິ່ງແວດລ້ອມໃຫ້ຍືນຍົງ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ພ້ອມກັນສອບຖາມ ແລະ ສົນທະນາແລກປ່ຽນບົດຮຽນ ຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນດ້ານຕ່າງໆທີ່ພົ້ນເດັ່ນພາຍໃນແຂວງ ເພື່ອຮັບຟັງການອະທິບາຍຊີ້ແຈງຕໍ່ຄະນະຮັບຜິດຊອບວຽກງານທີ່ກ່ຽວຂ້ອງ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດຂອງແຂວງ, ການຄ້າ-ການລົງທຶນ, ການພົວພັນຮ່ວມມືກັບຕ່າງປະເທດ ແລະ ອື່ນໆ.

**(ສຸກທະວີ)**

## ຕິດຕາມ...

(ຕໍ່ຈາກໜ້າ 1)

ຂອງເຈົ້າໜ້າທີ່ປະຈຳຢູ່ດ່ານສາກົນ ດ່ານດາກຕະອອກ ຢູ່ເມືອງດາກຈຶງ ແຂວງເຊກອງ ໂດຍມີທ່ານ ດົງເພັດ ພະຍົນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງເຊກອງ ຊຸດທີ II, ບັນດາພະແນກການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງໂຄງການ, ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ທີ່ປະຈຳຢູ່ດ່ານສາກົນດ່ານດາກຕະອອກ ໂດຍສະເພາະດ້ານແບບແຜນວິທີເຮັດວຽກ, ການມີສ່ວນຮ່ວມໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ-ຂອງເມືອງ, ການສົ່ງເສີມການຜະລິດກະສິກຳຢູ່ເຂດທ້ອງຖິ່ນ, ການແກ້ໄຂບັນດາຜົນກະທົບຕ່າງໆຂອງໂຄງການຕໍ່ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ແລະ ສິ່ງແວດລ້ອມ, ການຟື້ນຟູປ່າ ແລະ ປູກປ່າທົດແທນ, ການປະຕິບັດນະໂຍບາຍ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ວຽກງານຕ່າງໆທີ່ຕິດພັນ; ພ້ອມນັ້ນ, ກໍໄດ້ມີການສົນທະນາແລກປ່ຽນໃນຫຼາຍບັນຫາ ໂດຍຊອກໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ປາກົດການຫຍໍ້ທໍ້ຕ່າງໆທີ່ຈະຕ້ອງໄດ້ຮ່ວມກັນເອົາໃຈໃສ່ປັບປຸງແກ້ໄຂ.

ໂອກາດດັ່ງກ່າວ, ທ່ານປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາບໍລິສັດ ທີ່ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດພັນທະສັນຍາຕ່າງໆຂອງໂຄງການ ແລະ ຊົມເຊີຍຄະນະຮັບຜິດຊອບພາຍໃນດ່ານດາກຕະອອກ ທີ່ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຢ່າງຕັ້ງໜ້າ, ຮັກສາໄດ້ຄວາມສະຫງົບໂດຍພື້ນຖານ ແລະ ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ຕາມແຜນທີ່ວາງໄວ້; ພ້ອມດຽວກັນນັ້ນ, ຍັງໄດ້ສະເໜີໃຫ້ຜູ້ພັດທະນາໂຄງການເອົາໃຈໃສ່ສືບຕໍ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ປະກອບອາຊີບທີ່ໝັ້ນຄົງ, ຊຸກຍູ້ສົ່ງເສີມການຜະລິດກະສິກຳທີ່ເປັນທ່າແຮງຂອງທ້ອງຖິ່ນເປັນສິນຄ້າ, ພັດທະນາສີມືແຮງງານ, ປະຕິບັດພັນທະຕ່າງໆຕາມລະບຽບກົດໝາຍ ແລະ ອື່ນໆ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນໃຫ້ດີຂຶ້ນເປັນກ້າວໆ.

**(ລັດສະໝີ ແສງສະຫວ່າງ)**

## ພົບປະ...

(ຕໍ່ຈາກໜ້າ 1)

ງາມຖານບ້ານໃກ້ເຮືອນຄຽງທີ່ມີຄວາມຜູກພັນມາແຕ່ບູຮານນະການ, ມີຂະນົບທຳນຽມ, ວັດທະນະທຳ, ຮີດຄອງປະເພນີ ແລະ ພາສາປາກເວົ້າທີ່ຄ້າຍຄືກັນ ລະຫວ່າງສອງປະເທດລາວ-ໄທ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດໃຫ້ຈະເລີນງອກງາມ ແລະ ເກີດດອກອອກຜົນຍິ່ງໆຂຶ້ນ ແລະ ເພື່ອພົບປະແລກປ່ຽນບົດຮຽນ ລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ແລະ ກຳມາທິການສາທາລະນະສຸກ ວຸດທິສະພາ ແຫ່ງ ລາຊະອານາຈັກໄທ ພາຍໃຕ້ຫົວຂໍ້: “ການບໍລິຫານຈັດການວຽກງານດ້ານສາທາລະນະສຸກ ຂອງ ສປປລາວ”.

ໃນການພົບປະຄັ້ງນີ້, ທັງສອງຝ່າຍໄດ້ພ້ອມກັນຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການຢ້ຽມຢາມທາງການລາຊະອານາຈັກໄທ ຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໃນເດືອນຕຸລາ ປີ 2022 ແລະ ໄດ້ລົງນາມເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ລັດຖະສະພາ ແຫ່ງ ລາຊະອານາຈັກໄທ ໃນວັນທີ 31 ຕຸລາ 2022 ທີ່ກຸງເທບມະຫານະຄອນ ລາຊະອານາຈັກໄທ.

ພ້ອມນັ້ນ, ຍັງໄດ້ແລກປ່ຽນຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມຂອງຄະນະຜູ້ແທນຂັ້ນສູງ ຂອງລັດຖະບານ, ບັນດາຂະແໜງການໃນລະດັບສູນກາງ ແລະ ທ້ອງຖິ່ນ, ໄດ້ມີການຮ່ວມມືກັນຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ແລະ ບົດບັນທຶກຊ່ວຍຈຳໂດຍຜ່ານຫຼາຍກົນໄກການຮ່ວມມືທີ່ມີໝາກຜົນ; ແຈ້ງໃຫ້ຮູ້ກ່ຽວກັບສິດ, ພາລະບົດບາດ, ທີ່ຕັ້ງ ແລະ ກົງຈັກຂອງສອງອົງການນິຕິບັນຍັດ; ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການວັດທະນະທຳ-ສັງຄົມ ແລະ ກຳມາທິການສາທາລະນະສຸກ ວຸດທິສະພາ ແຫ່ງ ລາຊະອານາຈັກໄທ ແລະ ວຽກງານການບໍລິຫານຈັດການວຽກງານດ້ານສາທາລະນະສຸກ ຂອງ ສປປລາວ. ນອກຈາກນີ້, ຄະນະຝ່າຍລາວຍັງໄດ້ສະເໜີບາງເນື້ອໃນຈິດໃຈ ຄື: ສະເໜີໃຫ້ມີການສືບຕໍ່ແລກປ່ຽນການຢ້ຽມຢາມ ແລະ ໄປມາຫາສູ່ກັນໃຫ້ເປັນປົກກະຕິລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດລາວ ກັບ ກຳມາທິການສາທາລະນະສຸກ ວຸດທິສະພາ ແຫ່ງ ລາຊະອານາຈັກໄທ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນໃນການປະຕິບັດພາລະບົດບາດຂອງລັດຖະສະພາ; ສະເໜີໃຫ້ມີການແລກປ່ຽນຂໍ້ມູນໃນການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ ເປັນຕົ້ນ: ການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາ, ການຄຸ້ມຄອງ ແລະ ການໃຫ້ບໍລິການຄົນເຈັບ, ການສົ່ງເສີມການທ່ອງທ່ຽວລະຫວ່າງສອງປະເທດ, ການພັດທະນາຊັບພະຍາກອນມະນຸດ ແລະ ອື່ນໆ; ພ້ອມທັງສະເໜີສືບຕໍ່ສະໜັບສະໜູນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ກິດຈະກຳຮ່ວມມືພາຍໃຕ້ບັນດາກົນໄກການຮ່ວມມື ລາວ ແລະ ໄທ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

**(ສອນສັກ ວັນວິໄຊ)**

# ທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ




(ສພຊ) ໃນວັນທີ 3-5 ພຶດສະພາ 2023 ຢູ່ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ແຂວງອຸດົມໄຊ, ສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 11 ສະບັບ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ສົມຈິດ ປັນຍາສັກ ຮອງເຈົ້າແຂວງແຂວງອຸດົມໄຊ, ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າ, ສອງກຳລັງ ປກຊ-ປກສ ແລະ ຄະນະຮັບຜິດຊອບພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມກໍເພື່ອປະຕິບັດຕາມຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021, ການທາບທາມຮ່າງກົດໝາຍໃນຄັ້ງນີ້ ເປັນນິດໝາຍທີ່ສຳຄັນ ໃນການກ້າວໄປສູ່ການສ້າງລັດທີ່ປົກຄອງດ້ວຍກົດໝາຍໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ການພັດທະນາເສດຖະກິດ-ສັງຄົມ ຕາມທິດສາມສ້າງ ເຊິ່ງຮ່າງກົດໝາຍທີ່ນຳເອົາມາທາບທາມໃນມື້ນີ້ມີທັງໝົດ 11 ກົດໝາຍ, ສ້າງໃໝ່ 5 ກົດໝາຍຄື: ກົດໝາຍວ່າດ້ວຍການຈັດຫາງານ, ກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ກົດໝາຍວ່າດ້ວຍການປົກຄອງ, ກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ກົດໝາຍວ່າດ້ວຍສາທາລະນະສຸກ, ສະບັບປັບປຸງ 6 ກົດໝາຍຄື: ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍສານທະຫານ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ ແລະ ກົດໝາຍວ່າດ້ວຍທະນາຄານທຸລະກິດ.

ປະທານກອງປະຊຸມ, ໄດ້ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມ ຈົ່ງເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນຕາມສິດ ແລະ ໜ້າທີ່ຂອງຕົນໃນການປະກອບຄຳຄິດຄຳເຫັນໃສ່ບັນດາເນື້ອໃນຂອງຮ່າງກົດໝາຍ ຕາມການສະເໜີ ແລະ ເຈາະຈີ້ມຂອງຄະນະຮັບຜິດຊອບ ແລະ ບັນຫາອື່ນໆທີ່ເຫັນວ່າຈຳເປັນ ແລະ ຍັງບໍ່ທັນໄດ້ລະບຸໃນກົດໝາຍ.

(ແສງພອນ ອິນນະລົງ)



# ປຶກສາຫາລືກ່ຽວກັບການທາບທາມໃສ່ຮ່າງກົດໝາຍ




(ສພຊ) ໃນວັນທີ 8 ພຶດສະພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການສັງລວມບົດລາຍງານຜົນການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳສະພາປະຊາຊົນແຂວງ, ມີປະທານ-ຮອງປະທານຄະນະກຳມະການສະພາປະຊາຊົນແຂວງ, ເລຂາ-ຮອງເລຂາທິການສະພາປະຊາຊົນແຂວງ, ຄະນະຮັບຜິດຊອບ ແລະ ວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ກໍເພື່ອຮັບຟັງການລາຍງານ ແລະ ສ້າງຄວາມເປັນເອກະພາບກ່ຽວກັບການສັງລວມຜົນຂອງການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ຈາກບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ, ສະມາຊິກສະພາປະຊາຊົນແຂວງ, ພະແນກການ, ອົງການລັດ, ບັນດາຫົວໜ່ວຍສະຖາບັນການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ທາງໂຄງສ້າງ ແລະ ບັນດາເນື້ອໃນມີຄວາມຮັດກຸມ, ສອດຄ່ອງສະພາບການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ ທັງເພື່ອເປັນຂໍ້ມູນໃຫ້ແກ່ການກະກຽມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະແຫ່ງຊາດ ຊຸດທີ IX.

ກອງປະຊຸມໄດ້ຮັບຟັງຮ່າງບົດລາຍງານຜົນການສັງລວມການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ໂດຍທ່ານ ຄຳພັນ ຄຸນສົມບັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຈາກນັ້ນ, ປະທານກອງປະຊຸມໄດ້ເຈາະຈີ້ມຄືນຜົນຂອງການທາບທາມທີ່ເຫັນວ່າຍັງບໍ່ໂລ່ງລຽນ ແລະ ຍັງບໍ່ທັນມີຄວາມເປັນເອກະພາບ. ພ້ອມກັນນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນປະກອບຄຳເຫັນຢ່າງກົງໄປກົງມາ.

ປະທານກອງປະຊຸມ ໄດ້ສັງລວມຄືນຜົນຂອງກອງປະຊຸມ ເປັນຕົ້ນແມ່ນການປະກອບຄຳເຫັນເພີ່ມຕື່ມຈາກວິຊາການກ່ຽວຂ້ອງຂອງສະພາປະຊາຊົນແຂວງ; ໂຄງສ້າງ ແລະ ເນື້ອໃນຂອງບັນດາຮ່າງກົດໝາຍ ຈຳນວນ 11 ສະບັບ ແລະ ການຮ່າງບົດລາຍງານການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ເພື່ອລາຍງານຕໍ່ສະພາແຫ່ງຊາດ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ບັນດາຄະນະກຳມະການສະພາປະຊາຊົນແຂວງ ເອົາໃຈໃສ່ໃນການປັບປຸງຮ່າງບົດລາຍງານການທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 11 ສະບັບ ໃຫ້ສາມາດຍົກໃຫ້ເຫັນເຖິງເຈດຈຳນົງຂອງປະຊາຊົນບັນດາເຜົ່າ ແລະ ພະແນກການ, ອົງການ ແນໃສ່ໃຫ້ບັນດາເນື້ອໃນຮ່າງກົດໝາຍດັ່ງກ່າວພາວະວິໄສ, ສາມາດປົກປ້ອງສິດຜົນປະໂຫຍດລວມຂອງປະຊາຊົນບັນດາເຜົ່າ ແລະ ສາມາດຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະແຫ່ງຊາດ ຊຸດທີ IX.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ທາບທາມໃສ່ຮ່າງກົດໝາຍ

(ສພຊ) ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຈັດກອງປະຊຸມຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ແລະ ທາບທາມຄຳເຫັນໃສ່ຮ່າງກົດໝາຍຈຳນວນ 11 ສະບັບ ທີ່ຫ້ອງປະຊຸມຂອງພະແນກການເງິນແຂວງ; ໃນວັນທີ 3-4 ພຶດສະພາ 2023 ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມາ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ອະດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 40 ທ່ານ ຍິງ 10 ທ່ານ.



ກອງປະຊຸມຄັ້ງນີ້ ແມ່ນເພື່ອຕິດຕາມກວດກາຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນແຂວງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຂວງ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ເຊິ່ງໄດ້ຮັບຟັງການລາຍງານກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ. ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນໃສ່ບັນດາກົດໝາຍດັ່ງກ່າວເພື່ອນຳໄປປັບປຸງໃນຂັ້ນຕໍ່ໄປເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ ສາມາດນຳໄປຈັດຕັ້ງປະຕິບັດໄດ້ໃຫ້ໄດ້ຮັບຜົນດີ ແລະ ທາບທາມໃສ່ຮ່າງກົດໝາຍຈຳນວນ 11 ສະບັບຄື: ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ຮ່າງກົດໝາຍວ່າດ້ວຍການພິມຈຳໜ່າຍ, ຮ່າງກົດໝາຍວ່າດ້ວຍສາທາລະນະສຸກ, ຮ່າງກົດໝາຍວ່າດ້ວຍສານທະຫານ, ຮ່າງກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ຮ່າງກົດໝາຍວ່າດ້ວຍສັດປ່າ, ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ.

ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສຸມໃສ່ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ເປັນຕົ້ນແມ່ນດ້ານໂຄງສ້າງ, ດ້ານເນື້ອໃນຕ່າງໆແຕ່ລະໝວດ, ແຕ່ລະມາດຕາຂອງແຕ່ລະກົດໝາຍ ຕະຫຼອດຮອດການຈັດຕັ້ງປະຕິບັດເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນສອດຄ່ອງກັບສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ ແລະ ນຳເອົາຄຳຄິດເຫັນຂອງທຸກພາກສ່ວນເຂົ້າໃສ່ເນື້ອໃນຂອງຮ່າງກົດໝາຍໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ເພື່ອສາມາດນຳເອົາຮ່າງກົດໝາຍຈຳນວນ 11 ສະບັບ ດັ່ງກ່າວ ເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.



## ສພຂ ຄໍາມ່ວນ ສໍາເລັດການຈັດຕັ້ງກອງປະຊຸມທາບທາມຮ່າງກົດໝາຍ



(ສພຊ) ສະພາປະຊາຊົນແຂວງ (ສພຂ) ຄໍາມ່ວນ ໄດ້ຈັດກອງປະຊຸມທາບທາມໃສ່ຮ່າງກົດໝາຍ, ໃນລະຫວ່າງ 1-4 ພຶດສະພາ 2023 ທີ່ສໍານັກງານສະພາປະຊາຊົນແຂວງຄໍາມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານ ສພຂ ຄໍາມ່ວນ; ເຂົ້າຮ່ວມໂດຍທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຮອງເຈົ້າແຂວງແຂວງຄໍາມ່ວນ, ມີບັນດາທ່ານຄະນະປະຈໍາສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ12ແຂວງຄໍາມ່ວນ, ຄະນະສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນກອງປະຊຸມ, ປະທານໄດ້ນໍາພາການທາບທາມ ແລະ ຜ່ານເນື້ອໃນຄໍາຖາມເຈາະຈີ້ມເພື່ອເປັນທິດໃຫ້ແກ່ການປະກອບຄໍາເຫັນໃສ່ຮ່າງກົດໝາຍ ຈໍານວນ 11 ກົດໝາຍ ປະກອບມີ: ຮ່າງກົດໝາຍສ້າງໃໝ່ ຈໍານວນ 5 ສະບັບ, ຮ່າງກົດໝາຍສະບັບປັບປຸງ 6 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການປົກຄອງ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍສາທາລະນະສຸກ (ສ້າງໃໝ່);ຮ່າງກົດໝາຍວ່າດ້ວຍ ການຈັດພິມຈໍາໜ່າຍ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດນໍ້າ ແລະ ການປະມົງ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດປ່າ (ປັບປຸງ); ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປັບປຸງ); ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສານທະຫານ (ປັບປຸງ). ຈາກນັ້ນ, ບັນດາທ່ານຄະນະປະຈໍາສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ12ແຂວງຄໍາມ່ວນ, ຄະນະສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການ ແລະ ແຂກຖືເຊີນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າລະດົມຄໍາຄິດຄໍາເຫັນຕໍ່ຮ່າງກົດໝາຍ 11 ສະບັບດັ່ງກ່າວ ເຂົ້າໃນພາກ, ໝວດ ແລະ ມາດຕາ ເຊິ່ງມີການປະກອບຄໍາເຫັນໄດ້ທັງໝົດ 119 ເທື່ອຄົນ, ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ, ຮັດກຸມສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ໃຫ້ສາມາດນໍາເອົາຮ່າງກົດໝາຍຈໍານວນ 11 ສະບັບນີ້, ເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນບໍ່ດົນຕໍ່ໜ້ານີ້.

(ເອື້ອ ມະໂນສິງ)



## ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ




(ສພຊ) ໃນວັນທີ 3 ພຶດສະພາ 2023 ຢູ່ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໄດ້ມີກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ ຈໍານວນ 4 ສະບັບ ໂດຍການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈໍາພັກແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ ຈໍານວນ 4 ສະບັບຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນຈາກອົງການທີ່ກ່ຽວຂ້ອງ. ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ກໍໄດ້ມີຄໍາຄິດ, ຄໍາເຫັນແລກປ່ຽນຕາມຄໍາຖາມເຈາະຈີ້ມຂອງປະທານກອງປະຊຸມ ຕໍ່ອັນລວມ ແລະ ອັນສະເພາະ ໃນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທໍາ 4 ສະບັບ ໃນຂັ້ນທ້ອງຖິ່ນຕົນຢ່າງກົງໄປກົງມາ ແລະ ມີຈຸດສຸມ.

ໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ເນັ້ນໃຫ້ຜູ້ເຂົ້າຮ່ວມຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ຮຽກຮ້ອງໃຫ້ບັນດາຄະນະກໍາມະການທີ່ກ່ຽວຂ້ອງເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້ບັນດາພະແນກການ-ຂະແໜງການຕ່າງໆ ປະຕິບັດໜ້າທີ່ວຽກງານຂອງຕົນຕາມກົດໝາຍ, ນິຕິກໍາໃຕ້ກົດໝາຍຢ່າງເຂັ້ມງວດ ພ້ອມທັງເພີ່ມທະວີການຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ສອດຄ່ອງກັບກົດໝາຍ ແລະ ສະພາບເງື່ອນໄຂຕົວຈິງຕິດພັນກັບການປະສານງານເຊິ່ງກັນແລະກັນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານຂອງແຕ່ລະພາກສ່ວນ ໃຫ້ມີຄຸນນະພາບ, ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍທີ່ກໍານົດໄວ້.

## ກອງປະຊຸມທາບທາມຮ່າງກົດໝາຍ ທີ່ແຂວງໄຊສົມບູນ



(ສພຊ) ສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍຈໍານວນ 11 ສະບັບ ໃນວັນທີ 3-5 ພຶດສະພາ 2023 ຢູ່ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ພົອ. ວິໄຊທໍ່ເພຍຫຼວງ ຈົ່ງເສີ ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ຮອງປະທານສະພາປະຊາຊົນແຂວງໄຊສົມບູນ ພ້ອມດ້ວຍສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈໍາ 5 ເມືອງ ຕະຫຼອດຮອດບັນດາພະແນກການ, ອົງການ-ກົມກອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ການປະກອບຄໍາເຫັນຕໍ່ຮ່າງກົດໝາຍຈໍານວນ 11 ສະບັບຄື: ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ, ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ, ຮ່າງກົດໝາຍວ່າດ້ວຍການພິມຈໍາໜ່າຍ, ຮ່າງກົດໝາຍວ່າດ້ວຍ ສັດນໍ້າ ແລະ ການປະມົງ, ຮ່າງກົດໝາຍວ່າດ້ວຍ ສັດປ່າ, ຮ່າງກົດໝາຍວ່າດ້ວຍ ວຽກງານສາທາລະນະສຸກ, ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ຮ່າງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ແລະ ຮ່າງກົດໝາຍວ່າດ້ວຍສານທະຫານ ເພື່ອເປັນບ່ອນອີງໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ໄດ້ຄົ້ນຄ້ວາ ແລະ ປະກອບຄໍາຄິດເຫັນຢ່າງມີຈຸດສຸມແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ 11 ສະບັບ ທີ່ຈະນໍາເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດ.

(ແສງຕາວັນ ລັດຕະນະວົງ)





# ສພຂ ອັດຕະປື ທາບທາມຄຳເຫັນໃສ່ຮ່າງກົດໝາຍ



(ສພຊ) ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 160/ຄລສ.ກກໝ, ລົງວັນທີ 25 ເມສາ 2023 ວ່າດ້ວຍການທາບທາມຄຳເຫັນໃສ່ຮ່າງກົດໝາຍ 11 ສະບັບທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX.

ໃນວັນທີ 2 ພຶດສະພາ 2023 ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍຈຳນວນ 11 ສະບັບ ທີ່ຫ້ອງປະຊຸມ ສພຂ ອັດຕະປື ໂດຍການເປັນປະທານຂອງ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ, ມີບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ອະດີດການນຳພັກ-ລັດແຂວງ ພ້ອມດ້ວຍພະແນກການທີ່ກ່ຽວຂ້ອງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ຜູ້ເຂົ້າຮ່ວມກອງປະຊຸມຈະໄດ້ພ້ອມກັນສຸມທຸກສະຕິປັນຍາເຂົ້າໃນການຄົ້ນຄວ້າ, ວິເຄາະ, ເນື້ອໃນ ແລະ ການປະກອບຄຳເຫັນຕໍ່ ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ(ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍ ການປົກຄອງ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຈັດຫາງານ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ(ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍສາທາລະນະສຸກ (ສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຈັດພິມຈຳໜ່າຍ(ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ປັບປຸງ); ຮ່າງກົດໝາຍວ່າດ້ວຍສັດປ່າ (ປັບປຸງ); ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປັບປຸງ); ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ(ປັບປຸງ)ແລະ ຮ່າງກົດໝາຍວ່າດ້ວຍສານທະຫານ (ປັບປຸງ).

ເພື່ອເຮັດໃຫ້ເນື້ອໃນມີຄວາມຄົບຖ້ວນ, ສົມບູນ, ຮັດກຸມ, ຈະແຈ້ງ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ມີຄວາມຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ, ສາມາດນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.

**(ວິນັດ)**






# ສພຂ ສາລະວັນ ທາບທາມບັນດາຮ່າງກົດໝາຍ



(ສພຊ) ໃນວັນທີ 2 ພຶດສະພາ 2023 ຄະນະກຳມະການທັງ 3 ຄະນະຂອງສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມທາບທາມກົດໝາຍໃນຂົງເຂດທີ່ຕົນຮັບຜິດຊອບຄື:

ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມພະແນກການແຜນການ ແລະ ການລົງທຶນ ພາຍໃຕ້ການເປັນປະທານຂອງທ່ານ ພົຈວ. ພູວັນ ພິມມະຈັນ ຫົວໜ້າກອງບັນຊາການທະຫານແຂວງ; ເຂົ້າຮ່ວມມີປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດຄະນະກຳມະການ, ພາກສ່ວນທີ່ກ່ຽວຂ້ອງຂອງຂົງເຂດຍຸຕິທຳ, ປກຊ ແລະ ປກສ ເຊິ່ງຮ່າງກົດໝາຍທີ່ນຳມາທາບທາມ ປະກອບມີ 3 ສະບັບຄື: ຮ່າງກົດໝາຍວ່າດ້ວຍການປົກຄອງ, ຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍຈາກລັດ ແລະ ຮ່າງກົດໝາຍວ່າດ້ວຍສານທະຫານ.

ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມສະພາປະຊາຊົນແຂວງພາຍໃຕ້ການເປັນປະທານຂອງທ່ານ ຂັນໄຊລັດຖະເຮົາຮອງປະທານສະພາປະຊາຊົນແຂວງ; ມີຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂົງເຂດເສດຖະກິດ ແລະ ທະນາຄານເຂົ້າຮ່ວມ ໂດຍກົດໝາຍທີ່ນຳມາທາບທາມ ປະກອບມີ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ, ຮ່າງກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ຮ່າງກົດໝາຍວ່າດ້ວຍສັດປ່າ ແລະ ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ.

ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມສະໂມສອນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ສົມໃຈ ອຸ່ນຈິດ ຮອງເຈົ້າແຂວງແຂວງສາລະວັນ; ມີປະທານ-ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງທີ່ສັງກັດຄະນະກຳມະການ ມີແຂກທີ່ຖືກເຊີນຈາກຂົງວັດທະນະທຳ-ສັງຄົມເຂົ້າຮ່ວມ ໂດຍກົດໝາຍທີ່ນຳມາທາບທາມ ປະກອບມີ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ; ຮ່າງກົດໝາຍວ່າດ້ວຍການຈັດຫາງານ; ຮ່າງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ຮ່າງກົດໝາຍວ່າດ້ວຍການພິມຈຳໜ່າຍ.

ໃນແຕ່ລະກອງປະຊຸມ, ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດ, ຄຳເຫັນຢ່າງກົງໄປກົງມາດ້ວຍເຫດຜົນ ແລະ ຍົກເອົາປະສົບການ, ບົດຮຽນໃນການປະຕິບັດວຽກງານຕົວຈິງມາແລກປ່ຽນຄຳຄິດ, ຄຳເຫັນ, ນຳກັນຕາມເນື້ອໃນການເຈາະຈີ້ມຂອງບາງມາດຕາ ແລະ ມາດຕາອື່ນໆ ທີ່ມີຄວາມສົນໃຈ; ລົງເລິກໃສ່ບັນຫາການຈັດຕັ້ງປະຕິບັດຕົວຈິງໃນຜ່ານມາ ຂອດຂັ້ນການຈັດຕັ້ງປະຕິບັດທີ່ມີຄວາມຫຍຸ້ງຍາກ ເຊິ່ງທຸກຄຳເຫັນໃນກອງປະຊຸມທັງໝົດນີ້ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ເປັນໃຈກາງສັງລວມຄວາມຄິດເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນ, ພະແນກການ ແລະ ອົງການທີ່ກ່ຽວຂ້ອງ ແລ້ວຈະນຳສົ່ງໃຫ້ກຳມາທິການກົດໝາຍສະແຫ່ງຊາດ ໄດ້ນຳໄປຄົ້ນຄວ້າປັບປຸງໃນຂັ້ນຕໍ່ໄປ.

ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ກໍເພື່ອນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ໃນຕໍ່ໜ້າ.

**(ນາງ ຄັດສອນ ຮຸ່ງສະຫວ່າງ)**






# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

ບໍລິສັດນຳເຂົ້າ-ສົ່ງອອກຄຳ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ສາມາດນຳເຂົ້າ, ສົ່ງອອກ, ຊື້-ຂາຍຄຳທີ່ສາກົນນຳໃຊ້ເປັນເຄື່ອງມືການຊຳລະກັບລະຫວ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ.

ສະຖາບັນການເງິນສະເພາະທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ສາມາດໃຫ້ບໍລິການກ່ຽວກັບຄຳ ໃນຮູບແບບ ຊື້-ຂາຍ, ຮັບຝາກ, ໃຫ້ກູ້, ນຳເຂົ້າ, ສົ່ງອອກ ແລະ ຢັ້ງຢືນຄຸນນະພາບຄຳທີ່ສາກົນນຳໃຊ້ເປັນເຄື່ອງມືການຊຳລະກັບລະຫວ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ.

## ພາກທີ V
## ດຸນການຊຳລະກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດ

### ມາດຕາ 40 (ປັບປຸງ) ດຸນການຊຳລະກັບຕ່າງປະເທດ

ດຸນການຊຳລະກັບຕ່າງປະເທດ ແມ່ນສະຖິຕິທີ່ສັງລວມທຸລະກຳການແລກປ່ຽນທາງດ້ານເສດຖະກິດ ລະຫວ່າງຜູ້ມີ ແລະ ບໍ່ມີພູມລຳເນົາຢູ່ ສປປລາວ ເປັນຕົ້ນ ການຄ້າກັບຕ່າງປະເທດ, ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າກັບຕ່າງປະເທດ, ການລົງທຶນໂດຍກົງ, ການລົງທຶນໃນຫຼັກຊັບ, ການກູ້ຢືມ, ການຝາກເງິນ ລະຫວ່າງປະເທດ ໃນໄລຍະເວລາໃດໜຶ່ງ.

ທະນາຄານແຫ່ງ ສປປລາວ ຕ້ອງສັງລວມດຸນການຊຳລະກັບຕ່າງປະເທດ ປະຈຳໄຕມາດ ແລະ ປີ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

### ມາດຕາ 41 (ປັບປຸງ) ການສ້າງແຜນດຸນການຊຳລະກັບຕ່າງປະເທດ

ທະນາຄານແຫ່ງ ສປປລາວ ສົມທົບກັບກະຊວງ ແລະ ອົງການທີ່ກ່ຽວຂ້ອງ ສ້າງແຜນດຸນການຊຳລະກັບຕ່າງປະເທດ ເພື່ອໃຫ້ເປັນຂໍ້ມູນໃນການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ແລະ ການຄຸ້ມຄອງເສດຖະກິດມະຫາພາກ ແລະ ລາຍງານຕໍ່ລັດຖະບານໃນແຕ່ລະໄລຍະ. ການສ້າງແຜນດຸນການຊຳລະກັບຕ່າງປະເທດ ຕ້ອງຮັບປະກັນພັນທະຊຳລະກັບຕ່າງປະເທດ ຂອງ ສປປລາວ ໃນແຕ່ລະໄລຍະ.

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປລາວ ທີ່ມີທຸລະກຳການເງິນລະຫວ່າງປະເທດ ມີໜ້າທີ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບທຸລະກຳດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປລາວ ແລະ ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

### ມາດຕາ 42 (ໃໝ່) ຄັງສຳຮອງເງິນຕາຕ່າງປະເທດ

ຄັງສຳຮອງເງິນຕາຕ່າງປະເທດ ແມ່ນຊັບສິນທີ່ເປັນອົງປະກອບຖານະການເງິນຂອງທະນາຄານແຫ່ງ ສປປລາວ ເຊິ່ງປະກອບດ້ວຍ ເງິນຕາຕ່າງປະເທດ, ພັນທະບັດ, ສິດຖອນເງິນພິເສດ, ເອກະສານມີຄ່າທາງດ້ານການເງິນອື່ນ ທີ່ເປັນເງິນຕາຕ່າງປະເທດ ແລະ ຄຳທີ່ສາກົນຮັບຮູ້ ແລະ ນຳໃຊ້ເຂົ້າໃນການຊຳລະກັບຕ່າງປະເທດ.

ທະນາຄານແຫ່ງ ສປປລາວ ຄຸ້ມຄອງບໍລິຫານຄັງສຳຮອງເງິນຕາຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງ ເພື່ອຕອບສະໜອງໃຫ້ແກ່ການຈັດຕັ້ງປະຕິບັດແຜນເງິນຕາໃນແຕ່ລະໄລຍະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VI
## ຂໍ້ຫ້າມ

### ມາດຕາ 43 (ປັບປຸງ) ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນແລະການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຊຳລະ ແລະ/ຫຼື ຮັບຊຳລະ ຢູ່ ສປປລາວ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ, ກຳນົດໂຄງ ສ້າງລາຄາ ສິນຄ້າ ແລະ ການບໍລິການ ຢູ່ ສປປລາວ ເປັນເງິນຕາຕ່າງປະເທດ;
3. ໂຄສະນາ ແລະ/ຫຼື ປະກາດ ການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດ ກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆ;
4. ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການສ້າງຂ່າວປອມ ຫຼື ບິດເບືອນ ຂໍ້ມູນ ຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ;
5. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ;
6. ຊຳລະຄ່າສິນຄ້າ ແລະ ບໍລິການ ຢູ່ພາຍໃນ ແລະ ລະຫວ່າງປະເທດ ດ້ວຍການນຳໃຊ້ລະບົບການຊຳລະທີ່ບໍ່ສອດຄ່ອງກັບກົດໝາຍຂອງ ສປປລາວ;
7. ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ;
8. ໃຊ້ບໍລິການເງິນຕາຕ່າງປະເທດ ເປັນຕົ້ນ ແລກປ່ຽນເງິນຕາ, ໂອນເງິນກັບບຸກຄົນ, ນິຕິບຸກຄົນອື່ນທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ;
9. ເປີດ ແລະ ນຳໃຊ້ ບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້;
10. ນຳໃຊ້ບັນຊີເງິນຝາກອື່ນທີ່ບໍ່ແມ່ນບັນຊີເງິນຝາກສະເພາະ ເພື່ອຊຳລະການຄ້າ, ການບໍລິການ ແລະ ການລົງທຶນກັບຕ່າງປະເທດ;
11. ຮັກສາລາຍຮັບຈາກການສົ່ງອອກສິນຄ້າ, ການບໍລິການ ແລະ ການລົງທຶນໄວ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
12. ບໍ່ສະເໜີຂໍຢັ້ງຢືນ ຫຼື ຢັ້ງຢືນເກີນເວລາທີ່ກຳນົດ ໃນການນຳທຶນເຂົ້າ ສປປ ລາວ ນຳທະນາຄານແຫ່ງ ສປປລາວ;
13. ນຳທຶນອອກ ສປປລາວ ໄປລົງທຶນຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;
14. ກູ້ຢືມລະຫວ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
15. ບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີນຳເງິນຕາທີ່ເປັນເງິນສົດເຂົ້າ ສປປລາວ ເກີນຈຳນວນທີ່ກຳນົດໄວ້; ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ແລະ ບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີທີ່ນຳເງິນຕາເປັນເງິນສົດອອກ ສປປລາວ ເກີນຈຳນວນທີ່ໄດ້ກຳນົດໄວ້;
16. ປະຕິເສດການສະໜອງຂໍ້ມູນ ຫຼື ສະໜອງຂໍ້ມູນ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກ່ຽວກັບການເຄື່ອນໄຫວເງິນຕາຕ່າງປະເທດ;
17. ປະຕິເສດການໃຫ້ຄວາມຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ;
18. ເລີ່ນເລີ້ ຫຼື ເມີນເສີຍ ຕໍ່ການຈັດຕັ້ງປະຕິບັດວຽກງານເງິນຕາຕ່າງປະເທດ;
19. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການເງິນຕາຕ່າງປະເທດ

ຫ້າມຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ/ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;
2. ນຳໃຊ້, ໝູນໃຊ້ ຫຼື ສ້າງເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນອື່ນ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ການບໍລິການເງິນຕາຕ່າງປະເທດແທນຕົນໂດຍບໍ່ໄດ້ຮັບອະນຸຍາດ;
3. ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນທີ່ບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປລາວ, ກັກຕຸນເງິນຕາຕ່າງປະເທດ, ສ້າງຂ່າວປອມ ຫຼື ບິດເບືອນຂໍ້ມູນຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ;
4.. ສົມຮູ້ຮ່ວມຄິດກັບຜູ້ໃຊ້ບໍລິການ ໃນການດຳເນີນທຸລະກຳເງິນຕາຕ່າງປະເທດ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຜົນປະໂຫຍດຂອງກຸ່ມຄົນໃດໜຶ່ງ ທີ່ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ໃຫ້ສິນບົນ ແກ່ເຈົ້າໜ້າທີ່ ຫຼື ພະນັກງານຂອງລັດ ທີ່ກ່ຽວຂ້ອງ;
6. ປົດບັງຂໍ້ມູນ, ສະໜອງ ແລະ/ຫຼື ລາຍງານ ຂໍ້ມູນບໍ່ຖືກຕ້ອງ ຫຼື ປອມແປງເອກະສານ ກ່ຽວກັບການເຄື່ອນໄຫວເງິນຕາຕ່າງປະເທດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 45 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງມີພຶດຕິກຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ແລະ ຫ້າມມີພຶດຕິກຳ ເພີ່ມເຕີມດັ່ງນີ້:

1. ເປັນທີ່ປຶກສາ, ເປັນພະນັກງານ ໃຫ້ແກ່ຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ສົມຮູ້ຮ່ວມຄິດ, ສ້າງເງື່ອນໄຂເພື່ອເອື້ອອຳນວຍ ຫຼື ສ້າງຜົນປະໂຫຍດໃນການເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຢູ່ພາຍໃນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ;
5. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ/ຫຼື ໝູ່ຄະນະ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ລວມທັງການດຳເນີນທຸລະກຳທີ່ກ່ຽວຂ້ອງ;
6. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ກ່ຽວກັບທຸລະກຳເງິນຕາຕ່າງ ປະເທດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາ ວຽກງານເງິນຕາຕ່າງປະເທດ
## ໝວດທີ 1
## ການຄຸ້ມຄອງວຽກງານເງິນຕາຕ່າງປະເທດ

### ມາດຕາ 46 (ປັບປຸງ) ອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ

ລັດຖະບານ ແຫ່ງ ສປປລາວ ຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ.

### ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປລາວ

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ມາເປັນລະບຽບການ, ແຜນການ, ໂຄງການ, ແຜນງານລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາເຜີຍແຜ່, ຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ໃນຂອບເຂດທົ່ວປະເທດ ແລະ ປູກຈິດສຳນຶກໃຫ້ແກ່ສັງຄົມ ໃນການນຳໃຊ້ເງິນຕາໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

ອ່ານຕໍ່ສະບັບໜ້າ...




# ເມື່ອສັດທາຫຼາຍກວ່າປັນຍາ

# ດົ້ນກົບເມກ

ສັດທາທີ່ຕື້ນບາງຈະນຳມາເຊິ່ງຄວາມສັບສົນ; ສັດທາທີ່ຫຼາຍກວ່າປັນຍາ ຈະນຳມາເຊິ່ງຄວາມທຸກ ຂາດທິດທາງການດຳເນີນຊີວິດ ດັ່ງນັ້ນ, ຈຶ່ງມີຄຳຖາມວ່າເຮັດແນວໃດສະຕິປັນຍາຈຶ່ງຈະພອກພູນເກີດຂຶ້ນແກ່ຊາວພຸດລາວ...? ບໍ່ແມ່ນວ່າທຸກງານບຸນ ຜູ້ເທດກໍພຽງແຕ່ອະທິບາຍແຕ່ເລື່ອງການໃຫ້ທານ; ການມີສັດທາຖວາຍປັດໄຈ; ຫຼາຍງານບຸນນັ້ນ ຜູ້ນຳພາເນັ້ນແຕ່ເລື່ອງສັດທາຕາມທີ່ຜູ້ຂຽນສັງເກດເຫັນ.

ກິດຈະກຳສ້າງສັນປັນຍາ, ຄວາມຮູ້ໃນຫຼັກທຳມະປາກົດມີໜ້ອຍ ຍັງບໍ່ພຽງພໍໃຫ້ຊາວພຸດໄດ້ສຳຜັດ, ໄດ້ເຂົ້າຮ່ວມພັດທະນາ ຖ້າວ່າສັງຄົມພຸດທາກພຽງແຕ່ເນັ້ນເຮັດບຸນພຽງພິທີກຳ-ພຽງເພື່ອສະບາຍໃຈ ຄວາມທຸກກໍຈະເຂົ້າມາຢາມໄດ້ທຸກເວລາ ເພາະຂາດປັນຍາຊັ່ງຊາ-ຕັດສິນ; ເວົ້າແບບນີ້ ບໍ່ແມ່ນວ່າຜູ້ຂຽນອວດເກັ່ງດອກ ພຽງແຕ່ເວົ້າຈາກໄດ້ຍິນທາງສຽງ-ເວົ້າຈາກໄດ້ສັງເກດໂຕຈິງ ເຊິ່ງມີຄຳພັງເພີຍແດກດັນວ່າ: ເວົ້າເລື່ອງວິໄນ ຜິດໃຈພະ ເວົ້າເລື່ອງທຳມະ ຜິດໃຈໂຍມ: ຖ້າຫາກຈັບເອົາມາໄຈ້ແຍກຕາມໂຕອັກສອນພຸດທະບໍລິສັດ ບາງປະເທດກໍປົກປິດເຊື່ອງຊ້ອນໄວ້ບໍ່ໃຫ້ຄົນອື່ນຮູ້ຂໍ້ປະຕິບັດຂອງຕົນ ຍົກຕົວຢ່າງ: ວິໄນຂໍ້ໜຶ່ງ ບອກວ່າຖ້າພະເວົ້າປະຈົບປະແຈງຊາວບ້ານ (ຄົນລວຍ) ຫຼື ເວົ້າຫາປະໂຫຍດເຂົ້າຕົນຈະຜິດວິໄນຂໍ້ໃດ? ຊາວບ້ານກໍຈະຕອບບໍ່ໄດ້ ແລະ ບໍ່ຮູ້ຊ້ຳວ່າມີວິໄນຂໍ້ນີ້, ຊາວບ້ານເອງກໍເຊັ່ນດຽວກັນ ມີປາກົດການວັນສິນບໍ່ລະ ວັນພະບໍ່ວາງ ຂໍແຕ່ວ່າງມີປັດໄຈມີສະຫຼອງຊອງແຊວຕຳຈອກ ບາດສວ່າງເມົາຈຶ່ງຮູ້ເມື່ອວ່າໝົດທັງເງິນ ເສຍທັງເວລາ; ສັດທາຄືຄວາມເຊື່ອເປັນສິ່ງທີ່ດີ ເປັນພື້ນຖານຕ້ອງກ້າວໄປສູ່ການສຶກສາໃຫ້ຮູ້ແຈ້ງເປັນແວ່ນເຍງແກ່ກັນໄດ້, ເປີດໃຈໃຫ້ທຸກຝ່າຍສ່ອງແສງໄດ້ ແລະ ຫາ່ງຽງຫູຟັງຄົນອ້ອມຂ້າງວ່າເຂົາໂສກັນເລື່ອງໃດ.

ສັດທາເປັນສິ່ງທີ່ດີແຕ່ຢ່າລືມສ້າງປັນຍາ, ຢ່າລືມເວົ້າ, ເທດ, ອະທິບາຍທາງເກີດປັນຍາ, ປັນຍາຮູ້ແຈ້ງໃນຫຼັກທຳມະ, ຫຼັກການດຳເນີນຊີວິດບໍ່ໃຫ້ຜິດພາດຄືສິນທຳຄ້ອງໃຈໄວ້ ຊາວບ້ານໃຫ້ທານຊາວວັດກໍຕ້ອງໃຫ້ປັນຍາແດ່ເດີ!



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
| --- | --- |
| ຫົວສີໃດ | ຫົວສີໄດ |
| ໜ້າໃຄ່ | ໜ້າໄຄ່ |
| ນ້ຳໃສ | ນ້ຳໄສ |
| ເອົາໃຈໃສ່ | ເອົາໄຈໄສ່ |
| ນຳໃຊ້ | ນຳໄຊ້ |
| ແນວໃດ | ແນວໄດ |
| ຕັບໃດ | ຕັບໄດ |
| ພາກໃຕ້ | ພາກໄຕ້ |
| ລູກໃພ້ | ລູກໄພ້ |
| ໃຝ່ຝັນ | ໄຝ່ຝັນ |

# ບຸນຊຳຮະ (ບຸນເດືອນເຈັດ)

#ນາງ ສິດາ

ຄຳວ່າ "ສຳຮະ" ຫຼື "ຊຳລະ" ໝາຍເຖິງການລ້າງໃຫ້ສະອາດ ເຊັ່ນ ຊຳລະກາຍ, ສະສາງ, ປັບປຸງໃຫ້ດີຂຶ້ນ; ບຸນຊຳຮະ ຈຶ່ງມີຄວາມໝາຍວ່າ: ບຸນທີ່ຈັດຂຶ້ນ ເພື່ອທຳພິທີປັດເປົ່າຂັບໄລ່ຄວາມສະນຽດຈັງໄຣ ພູດຜີ ປີສາດອອກຈາກໝູ່ບ້ານ ບາງແຫ່ງເອີ້ນວ່າ "ບຸນເບີກບ້ານ"; ເມື່ອເຖິງເດືອນ 7 ໃຫ້ພາກັນລ້ຽງມະເຫສັກຫຼັກເມືອງອາຮັກເທບພະຍາດາທັງ 4 ຄື ທ້າວຈະຕຸໂລກະບານ ຜູ້ປົກຄອງຮັກສາໂລກທັງ4ອົງ ໄດ້ແກ່: ທ້າວທະຕະຣັຕຖະ, ທ້າວວິລຸນລະຫະ, ທ້າວວິຣູປັກຂະ ແລະ ທ້າວກຸເວລະ ແລະ ເທບພະຍາດາທັງ 8 ທິດ.

ໃນຄຳພີທຳມະບົດກ່າວໄວ້ວ່າ: ຄັ້ງໜຶ່ງເມືອງໄພສາລີ ເກີດພາວະເຂົ້າຢາກໝາກແພງ ປະຊາຊົນຂາດແຄນອາຫານ ເຊິ່ງເອີ້ນວ່າ "ທຸກພິກຂະໄພ" ເພາະຝົນແລ້ງສັດສາວາສິ່ງ, ປະຊາຊົນລົ້ມຕາຍ ເພາະຄວາມຫິວເປັນຈຳນວນຫຼວງຫຼາຍ ແຖມຍັງເກີດໂຣກອະຫິວາລະບາດເຮັດໃຫ້ຜູ້ຄົນລົ້ມຕາຍເປັນຈຳນວນຫຼວງຫຼາຍ ຊາວເມືອງກຸ່ມໜຶ່ງ ຈຶ່ງພາກັນໄປນິມົນພະພຸດທະເຈົ້າ ໃຫ້ມາປັດເປົ່າໄພພິບັດຄັ້ງນີ້ພະພຸດທະເຈົ້າໄດ້ສະເດັດຈາກເມືອງລາຊະຄືພ້ອມດ້ວຍພະສົງ 500 ອົງ ໂດຍມາທາງເຮືອ ໃຊ້ເວລາເດີນທາງ 7 ວັນ ຈຶ່ງເຖິງເມືອງໄພສາລີ ເມື່ອພະພຸດທະເຈົ້າສະເດັດເຖິງເມືອງໄພສາລີ ກໍເກີດ "ຝົນຫ່າແກ້ວ" ຕົກລົງຢ່າງໜັກ ຈົນນ້ຳຖ້ວມແຜ່ນດິນສູງເຖິງຫົວເຂົ່າ ແລະ ນ້ຳຝົນກໍພັດພາເອົາຊາກສົບຂອງຜູ້ຄົນ ແລະ ສັດຕ່າງໆ ໄຫຼລ່ອງລອຍລົງແມ່ນ້ຳໄປຈົນໝົດ; ເມື່ອພະພຸດທະເຈົ້າໄດ້ສູດນ້ຳພະພຸດທະມົນໃສ່ບາດແລ້ວມອບໃຫ້ພະອານົນໄປປະພົມ ຫຼື ຟົດໄປທົ່ວເມືອງ ໂຣກໄພໄຂ້ເຈັບກໍສູນສິ້ນໄປ ດ້ວຍເດຊາພະພຸດທານຸພາບ ດັ່ງນັ້ນຄົນລາວບູຮານຈຶ່ງເຮັດບຸນຊຳຮະຂຶ້ນໃນເດືອນ 7 ຂອງທຸກໆປີເພື່ອລ້ຽງເທວະດາອາຮັກ ມະເຫສັກຫຼັກເມືອງ ວິລະບູລຸດບັນພະບູລຸດ ຜີໄຮ່ ຜີນາ (ແຮກນາຂວັນ) ໂດຍໄດ້ມີຄຳກອນໜຶ່ງກ່າວໄວ້ວ່າ:

ພໍເມື່ອເດືອນເຈັດແລ້ວ ຈຶ່ງພາກັນບູຊາຣາດ
ຝູງໝູ່ເທບເຫຼົ່ານັ້ນ ບູຊາໝົດທຸກຝ່າຍ
ຕະຫຼອດໄປຮອດອ້າຍ ອາຮັກໃຫຍ່ມະເຫສັກ
ທັງຫຼັກເມືອງ ສູ່ຫີນບູຊາເຈົ້າ
ພາກັນເອົາໃຈຕັ້ງ ເຮັດຕາມຮີດເກົ່າ
ນິມົນສັງຄະເຈົ້າ ຊຳຮະແທ້ສູດມົນ
ໃຫ້ຝູງຄົນເມືອງນັ້ນ ກະທຳກັນຢ່າໄດ້ຫ່າງ
ສູດຊຳຮະເມືອງຢ່າຄ້າງ ຊິເສຍເສົ້າຕ່ຳສູນ
ທຸກຊິໃຫ້ແລ່ນວຸ້ນ ມາໂຮມໃສ່ເຕັມເມືອງ
ມັນຊິເຄືອງຄ່ຳຂັດ ຕ່ຳລົງສູນເສົ້າ
ໃຫ້ເຈົ້າເຮັດຕາມນີ້ ຄືເຮົາໄດ້ບອກກ່າວ
ຈຶ່ງຊິສຸກຢູ່ສ້າງ ສະຫວັນຟ້າເກັ່ງກັນ
ແມ່ນທຸກຮ້ອນໝື່ນຊັ້ນ ບໍ່ມີວ່າຊິມາພານ
ປານກັບເມືອງສະຫວັນ ສຸກເກັ່ງກັນທຽມໄດ້.




## ສັບພາສາ

ວ່າດ້ວຍທິດ ທີ່ລຽງຕາມລຳດັບ ຄື:

1. ທິດບໍລະພາ ແມ່ນທິດຕາເວັນອອກ (ງູດ)
2. ທິດອາຄະເນ ແມ່ນທິດຕາເວັນອອກສ່ຽງໃຕ້ (ແມວ)
3. ທິດອີສານ ແມ່ນທິດຕາເວັນອອກສ່ຽງເໜືອ (ງົວ)
4. ທິດປັດຈິມ ແມ່ນທິດຕາເວັນຕົກ (ນາກ)
5. ທິດຫໍລະດີ ແມ່ນທິດຕາເວັນຕົກສ່ຽງໃຕ້ (ເສືອ)
6. ທິດພາຍັບ ແມ່ນທິດຕາເວັນຕົກສ່ຽງເໜືອ (ໝູ)
7. ທິດທັກສິນ (ທັກຂິນ) ແມ່ນທິດໃຕ້ (ລາຊະສີ)
8. ທິດອຸດອນ ແມ່ນທິດເໜືອ (ຊ້າງ)



## ສຸຂະສະບາຍຫາຍໂຣຄາ

# ໄພອັນຕະລາຍຈາກແສງ

**ແປ ແລະ ຮຽບຮຽງໂດຍ: ບົງເອີນ**



ແສງສີຟ້າ ແມ່ນແສງທີ່ມີພະລັງງານສູງ ທີ່ປະສົມຢູ່ໃນແສງສີຂາວທີ່ມະນຸດສັງເກດເຫັນໄດ້ ແລະ ຢູ່ອ້ອມຮອບຕົວເຮົາ ມັນສາມາດສົ່ງຜົນຕໍ່ກັບຜິວໜັງຂອງເຮົາໄດ້ຢ່າງບໍ່ຄາດຄິດ ເພາະເປັນແສງທີ່ສາມາດພົບໄດ້ໃນແສງແດດ, ດອກໄຟຟູອໍເຣນ ເຊັ່ນ: ຈາກໜ້າຈໍໂທລະສັບ, ຄອມພິວເຕີ, ໂທລະພາບ ແລະ ຈໍແອວອີດີ; ສະນັ້ນ, ຖ້າໃຜຄິດວ່ານັ່ງຢູ່ໜ້າຈໍຄອມພິວເຕີ ແລະ ໂທລະສັບຢູ່ພາຍໃນເຮືອນ ຫຼື ໃນຫ້ອງການ ຫຼື ໃຊ້ຄີມກັນແດດເປັນປະຈໍາແລ້ວຈະປອດໄພຈາກແສງສີຟ້າ ທ່ານຕ້ອງຄິດທົບທວນໃໝ່ອີກຄັ້ງແລ້ວຫຼະ.

**ຜົນກະທົບແສງສີຟ້າມີຄື:**

- ເຮັດໃຫ້ເກີດສານອະນຸມູນອິດສະຫຼະ ທີ່ມີສ່ວນຊ່ວຍກະຕຸ້ນການຜະລິດເອັນຊາຍທີ່ທໍາລາຍຄໍລາເຈນ (Collagen) ແລະ ອີລາດສຕິນ (Elastin) ໃນຜິວໜັງ, ເຮັດໃຫ້ເຊວຜິວໜັງເສື່ອມສະພາບໄວກ່ວາປົກກະຕິພາໃຫ້ເກີດຮອຍຫ່ຽວຍ່ານ, ຜິວຂາດຄວາມຊຸ່ມຊື່ນ ແລະແກ່ກວ່າໄວ;

- ໃນຕອນກາງຄືນ ແສງສີຟ້າຈະລົບກວນການເຮັດວຽກຂອງຮ່າງກາຍ ເຮັດໃຫ້ຜິວໜັງຜິດປົກກະຕິຈາກທີ່ຄວນຈະເປັນ ແລະ ສົ່ງຜົນກະທົບຕໍ່ຂະບວນການຟື້ນຟູຕາມທໍາມະຊາດຂອງຜິວໜັງ ເຮັດໃຫ້ຜິວໜັງແກ່ກວ່າໄວ ເພາະແສງສີຟ້າເປັນຕົວການເຮັດໃຫ້ຜິດໜັງເກີດຄວາມຮັບຮູ້ຜິດວ່າເປັນເວລາກາງເວັນ;

- ກະຕຸ້ນການເກີດຝ້າ, ກະ, ຝ້າແດດຝັງເລິກ, ຈຸດດ່າງດໍາ, ຜິວໝອງຄໍ້າ ເຊັ່ນດຽວກັນກັບແສງຢູວີເອ ແລະ ຢູວີບີ;

- ແສງສີຟ້າ ສາມາດເຮັດໃຫ້ເກີດການອັກເສບຂອງຜິວໜັງ ແລະ ເຮັດໃຫ້ເກີດຈຸດດ່າງດໍາ;

- ເຮັດໃຫ້ເກາະປ້ອງກັນຜິວອ່ອນແອລົງ, ສີຜິວບໍ່ສະໝໍ່າສະເໝີ ຈາກການສຶກສາປີ 2008 ຂອງນັກຄົ້ນຄວ້າຊາວຍີ່ປຸ່ນ ໃນໜູທົດລອງ ພົບວ່າແສງສີຟ້າແຊກແຊງການຟື້ນຟູເກາະປ້ອງກັນຜິວໜັງ;

- ລົບກວນການເຮັດວຽກຂອງຮໍໂມນ ທີ່ຊ່ວຍໃຫ້ນອນຫຼັບ ພາໃຫ້ນອນບໍ່ຫຼັບ ແລະ ສົ່ງຜົນເສຍຫາຍໂດຍທາງອ້ອມ ເຮັດໃຫ້ຜິວໜັງຂອງເຮົາຊຸດໂຊມ.

ນອກຈາກແສງສີຟ້າຈະເປັນອັນຕະລາຍຕໍ່ຜິວໜັງແລ້ວ ຍັງເປັນອັນຕະລາຍຕໍ່ກັບດວງຕາ ເພາະມັນເປັນຕົວການສໍາຄັນ ທີ່ພາໃຫ້ເກີດພາວະຕາເມື່ອຍລ້າ, ຕາແຫ້ງ, ຕາລາຍ, ຕາມົວ ແລະ ນໍ້າຕາໄຫຼ; ນອກຈາກນີ້, ການພົບກັບແສງສີຟ້າ ເປັນເວລາດົນໆ ຍັງເຮັດໃຫ້ຈໍປະສາດຕາເສື່ອມໂຊມລົງເທື່ອລະໜ້ອຍນໍາອີກ ເນື່ອງຈາກຄື້ນແສງພະລັງງານສູງ ຈະຊັກນໍາໃຫ້ການສ້າງອະນຸມູນອິດສະຫຼະ ເຮັດໃຫ້ເຊວຄ່ອຍໆເສື່ອມລົງ ເຊິ່ງຜູ້ຍິງຈະມັກເປັນພະຍາດນີ້ຫຼາຍກວ່າຜູ້ຊາຍ.

**ວິທີປ້ອງກັນ**

- ຫຼຸດຜ່ອນການຫຼິ້ນໂທລະສັບມືຖື ຫຼື ແທັບເລັດໃຫ້ໜ້ອຍລົງ ໂດຍສະເພາະໃນຕອນກາງຄືນ

- ປັບແສງໜ້າຈໍຄອມພິວເຕີ ຫຼື ໂທລະສັບມືຖືໃຫ້ເບົາບາງລົງ ແລະ ບໍ່ແຈ້ງຈົນເກີນໄປ;

- ຕິດຟິມປ້ອງກັນແສງສີຟ້າ ໃສ່ໜ້າຈໍຄອມພິວເຕີ, ໂທລະສັບມືຖື ແລະ ແທັບເລັດ;

- ຊອກຫາກິດຈະກໍາເຮັດໃນເວລາຫວ່າງ ເຊັ່ນ: ອ່ານປຶ້ມ, ຫຼິ້ນກິລາ...; ແທນທີ່ຈະຢູ່ກັບໜ້າຈໍ

- ໃຊ້ຜະລິດຕະພັນບໍາລຸງຜິວ ຫຼື ຄວາມຊຸ່ມຊື່ນທີ່ມີສານລູທີນ, ເບຕາເຄໂລທີນ, ວິຕາມິນຊີ ຫຼື ສານຕ້ານອະນຸມູນອິດສະລະ (Antioxidant) ເພື່ອຊ່ວຍປົກປ້ອງຜິວ ແລະ ກະຕຸ້ນການຜະລິດຄໍລະເຈນໃຫ້ກັບຜິວ.

- ໃຊ້ຄີມກັນແດດທີ່ມີຄຸນສົມບັດປ້ອງກັນຢູວີ ແລະ ແສງສີຟ້າ.

## ອາດ ກະວີລາວ

## ຄົນມັກຈົ່ມ

**# ໂດຍ: ໂອທອງ ຄໍາອິນຊູ**

✻ ຄົນມັກຈາຈົ່ມຮ້າຍ — ເປັນຕາໜ່າຍຍາມຟັງ
ຈັກລົມຫຍັງນໍາໃຜ — ບໍ່ຖືກໃຈພໍໜ້ອຍ
ຊອມແຕ່ ເອົາຄໍາປ້ອຍ — ມາໄຫຼລອຍລາມອອກ
ຊອກແຕ່ເຕືອນຕະຫຼອດມື້
ຖືແຕ່ຕົນວ່າໂກ້ — ປະໂຫຍດອ້າງອວດບໍ່ເຊົາ

✻ ຄັນເຫັນເຮົາຍ່າງຊ້າ — ຫາວ່າບໍ່ທັນໃຜ
ມຶງຊິຕາຍຫຼືໃດ — ວ່ອງໄວແດ່ແມທ້າວ
ມາຮ່າວ ເປັນຄົນເຕື້ອຍ — ບໍ່ຂັນແຂງຂິງຂະໜາດ
ຮ່າຟາດ ທັງຮ່າຂ້ຶວ — ລົວລີ້ນທັ່ງໃສ່ຫູ

✻ ພໍເຫັນກູແລ່ນຊໍ້າ — ທໍາທ່າບໍ່ພໍໃຈ
ຟ້າວໄປຕາຍຫຼືໃດ — ບໍ່ຄ່ຽມຄົມໃຫ້ຄືບ້ານ
ສຽງດ່າປານໄຟໄໝ້ — ກໍເລົ່າຢູ່ໃນເຫຼົ້າ
ຮ່າແດກ ທັງຮ່າຕົ້ມ — ຄໍາສົ້ມທັ່ງອອກມາ

✻ ແນມໄປເຫັນປ່າຫຍ້າ — ເໜັງໜ່ວມຢູ່ປາຍຕີນ
ຫາວ່າມັນຂຶນຕາ — ດ່າບໍ່ເຊົາວ່າລົມຕ້ອງ
ບໍ່ສ່ອງແນມນໍາໃຫ້ — ເຫັນໃນຈື່ງຈາຈ່າຍ
ຢ້ານແຕ່ງູເຫົ່າຮ້າຍ — ຢູ່ໃນຫຍ້າຕອດຂາ ມຶງເດ.



## ຫົວຫາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ **ອາ**ທິດຜ່ານມາ ເຫັນຂ່າວວ່າຢູ່**ເມືອງໄຊເສດຖາ** ແລະ **ຈັນທະບູລີ** ນະຄອນຫຼວງວຽງຈັນ ມີການທົດລອງປ່ອຍ **ຍຸງລາຍບ້ານ** ທີ່ມີເຊື້ອຈຸລິນຊີ **ໂວບັກເຄຍ** ເພື່ອປະກອບສ່ວນເຂົ້າໃນການຄວບຄຸມ ຫຼືສົ່ງຕໍ່ເຊື້ອໄຂ້ຍຸງລາຍໃນ **ສປປ ລາວ** ໃຫ້ຫຼຸດຜ່ອນລົງ ຂ່າວຍັງບົ່ງບອກອີກວ່າ ໄລຍະ **30 ປີທີ່ຜ່ານມາ** ແມ່ນໃຊ້ຫຼາຍວິທີ ເພື່ອປາບປາມ ເຊັ່ນ 5 ປ, ຢາຂ້າແມງ ແລະ ວິທີອື່ນໆ ແຕ່ຍັງບໍ່ໄດ້ຮັບຜົນດີ ຈຶ່ງນໍາໃຊ້ວິທີດັ່ງກ່າວ ຂ່າວໄດ້ບົ່ງບອກແຈ້ງ ຄະແຫຼງວ່າບໍ່ເປັນໄພ **ປອດໄພທັງຄົນສັດ** ແລະ **ລະບົບນິເວດ** ພ້ອມທັງມີປະສິດທິພາບ ຍືນຍົງ ຜົນໄດ້ຮັບ ກົງກັບຄໍາກ່າວໄວ້ ບູຮານເພິ່ນສັ່ງສອນ **"ໜາມບັກໃຫ້ເອົາໜາມບົ່ງ"**.

✻ **"ປະເທດລາວຕິດອັນດັບ 2 ໃນການສົ່ງອອກກາເຟ"** ເພີ່ນວ່າ! ເຫັນຂ່າວໃຈຕື່ນເຕັ້ນ ເຕັ້ນຕຶກຕັກ ທັງຕິດຕາມ ລາມຊອກຫາເຫດຜົນ ເລື່ອງລາວໃນນັ້ນ ພໍ່ແຕ່ຫັນ**ໄປຊື້ ລາຄາສັງເປັນຕ່າງ ເດບໍ່!** ເພາະຄືບຂຶ້ນນັບມື້ ແນວນີ້ກະຊ່າງເປັນ **ກາເຟເອີຍ!**.

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ບໍ່ໄດ້ເຮັດຫຍັງ**

ມື້ໜຶ່ງ, ມີເດັກນ້ອຍສາມຄົນໄປທ່ຽວສວນສັດ ພາກັນເລາະເບິ່ງແຂ້ຢູ່ແຄມໜອງ ແລະ ກໍພາກັນດີກກ້ອນຫີນໃສ່ ຍ້ອນແຂ້ທິວເລີຍໃຈຮ້າຍ ຈຶ່ງໂດດເຂົ້າມາແຄມໜອງ, ສອງຄົນແລ່ນປົບ ແລະ ອີກຄົນໜຶ່ງຢືນເສີຍແບບບໍ່ຢ້ານ, ໝູ່ສອງຄົນເຫັນກະເລີຍຮ້ອງມາໃສ່: ຮີບແລ່ນໜີທະແມ ມຶງບໍ່ຢ້ານ ຕາຍຫວາ?

**ຜູ້ກ່ຽວ:** ກູຊິປົບໃຫ້ເມື່ອຍເຮັດຫຍັງ ແນວກູບໍ່ໄດ້ດີກກ້ອນຫີນໃສ່ມັນ!



## ຄະຕິເຕືອນໃຈ

**# ດອກສະຍອມ**

ເຫັນວ່າດ່າຊີ້ຫຼີ້ — ຢ່າຟ້າວລີ່ເຮືອກາຍ
ເຫັນວ່າຄາຍລາຍ — ຢ່າຟ້າວພາຍເຮືອເວັ້ນ
ບາດວ່າເຮືອຄາແກ້ງ — ຄົນດ່າພໍ່ໄດ້ຊ່ອຍ
ຄົນບໍ່ໄດ້ຊ່ອຍຍູ້ — ຍັງຊິໄດ້ຊ່ອຍພາຍ




# ປັດຈຸບັນ - ປະຈຸບັນ

ຄຳທີ່ມີຄວາມໝາຍວ່າ ເວລາດຽວນີ້, ເວລາລະຫວ່າງອະດີດກັບອະນາຄົດ ເຊິ່ງປາກົດມີການນຳໃຊ້ໃນວົງການຂີດຂຽນເປັນສອງຢ່າງຄື "ປັດຈຸບັນ" ແລະ "ປະຈຸບັນ".

ໃນເມື່ອກ່ອນ ສະໄໝທ້າຍສະຕະວັດທີ 19 ແລະຕົ້ນສະຕະວັດທີ 20 ການນຳໃຊ້ຄຳສັບທີ່ມີຄວາມໝາຍວ່າ ເວລາລະຫວ່າງແຕ່ກ່ອນແລະຕໍ່ໄປຂ້າງໜ້າ, ຄົນລາວເຮົາມັກໃຊ້ຄຳວ່າ ບັດນີ້ - ດຽວນີ້ - ເວລານີ້.

ສ່ວນຄຳວ່າ "ປັດຈຸບັນ" ຫຼື "ປະຈຸບັນ" ແມ່ນເລີ່ມໃຊ້ໃນຊຸມປີ 30 ຂອງສະຕະວັດທີແລ້ວ ໂດຍປາກົດເຫັນໃຊ້ຢູ່ໃນປຶ້ມໄວຍາກອນລາວ ປີ 1935 ຂອງຫໍພະສະໝຸດປະເທດລາວ ເຊິ່ງສະກົດຕາມເຄົ້າ "ປັດຈຸບັນ" ແລະກໍໄດ້ບັນຈຸຄຳນີ້ໄວ້ຢູ່ໃນວັດຈະນານຸກົມລາວ ປີ 1960 ຂອງມະຫາສິລາ ວິລະວົງ ໂດຍສະກົດເປັນ "ປັດຈຸບັນ".

ຈົນມາຮອດປີ 1962 ມີການສ້າງຫຼັກສູດໃໝ່ຂອງກະຊວງສຶກສາທີ່ວຽງຈັນ ກໍໄດ້ສະກົດຄຳນີ້ເປັນ "ປະຈຸບັນ" ແລະຕໍ່ມາຢູ່ໜ້າໜັງສືພິມ-ວາລະສານຕ່າງໆໃນເວລານັ້ນ ກໍສະກົດເປັນ "ປະຈຸບັນ".

ສ່ວນໃນເຂດປົດປ່ອຍກໍໄດ້ໃຊ້ທັງສອງແບບ ມີທັງ "ປັດຈຸບັນ" ແລະປະຈຸບັນເຊິ່ງໃນໄວຍາກອນລາວປີ 1967 ໄດ້ອະທິບາຍວ່າ ຖ້າເປັນຕົ້ນວະລີໃຫ້ຂຽນເປັນ "ປະຈຸບັນ" ເຊັ່ນ ປະຈຸບັນນີ້, ຖ້າເປັນທ້າຍວະລີໃຫ້ຂຽນເປັນປັດຈຸບັນ ເຊັ່ນ ໂລກປັດຈຸບັນ.

ນັບແຕ່ປີ 1975 ເປັນຕົ້ນມາ ການຂຽນຄຳນີ້ ມີທັງ "ປະຈຸບັນ" ແລະ "ປັດຈຸບັນ". ແຕ່ສັງເກດໄດ້ວ່າ "ປະຈຸບັນ" ໃນເບື້ອງຕົ້ນນິຍົມໃສ່ທາງເບື້ອງໜັງສືພິມ ແລະ ວາລະສານ, ສ່ວນ "ປັດຈຸບັນ" ແມ່ນໄດ້ກຳນົດໃຊ້ຢູ່ໃນປຶ້ມແບບຮຽນ ແຕ່ປະຖິ້ມເຖິງມັດທະຍົມປາຍ.

ມາເຖິງປັດຈຸບັນ, ເມື່ອສຳຫຼວດເບິ່ງໃນໜ້າໜັງສືພິມ ແລະ ວາລະສານແລ້ວ ປາກົດວ່າ ໜັງສືພິມ ແລະ ວາລະສານສ່ວນຫຼາຍນຳໃຊ້ "ປັດຈຸບັນ". ເຫັນມີແຕ່ວາລະສານ ແລະ ໜັງສືພິມຈຳນວນໜຶ່ງເທົ່ານັ້ນທີ່ໃຊ້ "ປະຈຸບັນ". ແຕ່ກໍມີບາງວາລະສານເຫັນມີນຳໃຊ້ທັງສອງແບບການສະກົດຄຳ.



ທ່ານເອີຍ! ຢ່າມອງຂ້າມຜູ້ງ
ຊົນຄົນທຳມະດາທີ່ພາກັນອຸທິດ
ເຫື່ອແຮງ ແລະ ຊັບສິນເລັກໆນ້ອຍໆ
ມາພັດທະນາຊຸມຊົນ ທ່າງໄກສອກຫລີກ, ດ້ານເຈົ້າເຫຼົ່ານັ້ນ ບໍ່ມີຈິດໃຈຮັກຊາດ ລັງເຈົ້າກໍບໍ່ມາເຮັດໃຫ້ຄົນໃສ່ຮ້າຍ ແທນທີ່ຈະມາໃຫ້ກຳລັງໃຈ ໃຫ້ໃບຍ້ອງຍໍເຈົ້າໃບໜຶ່ງກໍຍັງດີ.



# ຫວຽດນາມ ກະກຽມກົດໝາຍ ໃຫ້ຜູ້ໃຊ້ສື່ສັງຄົມອອນລາຍ "ຕ້ອງຢັ້ງຢືນຕົວຕົນ"



*ການປົກຄອງຫວຽດນາມ ວາງແຜນຈະຮຽກຮ້ອງໃຫ້ບັນດາຜູ້ໃຊ້ສື່ສັງຄົມອອນລາຍ ເຊັ່ນ ເຟສບຸກ, YouTube ແລະ TikTok ຢືນຢັນຕົວຕົນ ເພື່ອຕ້ານການຫຼອກລວງທາງອອນລາຍ.*

ອີງຕາມການລາຍງານຂ່າວວັນທີ 10 ພຶດສະພານີ້ ໃຫ້ຮູ້ວ່າ: ຫວຽດນາມມີອັດຕາການສໍ້ໂກງທາງອອນລາຍສູງທີ່ສຸດໃນອາຊີ ໂດຍສະເພາະແມ່ນການຫຼອກລວງທາງດ້ານການເງິນ, ການໂຈລະກຳຂໍ້ມູນ.

ທ່ານ ຫງວຽນ ແທັງ ເລີມ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ ແລະ ການສື່ສານຫວຽດນາມ ໃຫ້ຮູ້ວ່າ: "ບັນດາບັນຊີໃນເຄືອຂ່າຍສັງຄົມອອນລາຍທີ່ບໍ່ໄດ້ຮັບການຢັ້ງຢືນຈະຖືກຈຳກັດ".

ທ່ານກ່າວຕື່ມວ່າ ກົດໝາຍໃໝ່ກ່ຽວກັບຂໍ້ມູນອອນລາຍເຊິ່ງມີກຳນົດການຈະອອກໃນທ້າຍປີນີ້ ຈະເຮັດໃຫ້ມາດຕະການເປັນຂໍ້ບັງຄັບໃຊ້ ແລະຍັງປ້ອງກັນບໍ່ໃຫ້ໃຊ້ແພັລດຟອມເຫຼົ່ານັ້ນ ເພື່ອສ້າງກຸ່ມຂອງອາຊະຍາກອນທີ່ບໍ່ສາມາດຕິດຕາມໄດ້ ເນື່ອງຈາກວ່າຜູ້ໃຊ້ສື່ສັງຄົມອອນລາຍ ເຊິ່ງລະເມີດກົດໝາຍດ້ວຍການໃຊ້ແພັລດຟອມຂ້າມແດນ.

ເຖິງຢ່າງໃດກໍຕາມ, ລັດຖະບານຫວຽດນາມ ຍັງບໍ່ທັນໄດ້ເປີດເຜີຍລາຍລະອຽດກ່ຽວກັບການລົງໂທດທີ່ອາດເປັນໄປໄດ້ ຖ້າຫາກວ່າລະເມີດກົດໝາຍດັ່ງກ່າວ.

ການເຄື່ອນໄຫວດັ່ງກ່າວມີຂຶ້ນພຽງໜຶ່ງເດືອນຫຼັງຈາກເຈົ້າໜ້າທີ່ຫວຽດນາມ ກ່າວວ່າ ພວກເຂົາເຈົ້າຈະສືບສວນ TikTok ກ່ຽວກັບ "ເນື້ອໃນທາງລົບ" ແລະ ຂໍໃຫ້ບໍລິສັດເຕັກໂນໂລຢີຕ່າງປະເທດ ສ້າງຕັ້ງຫ້ອງການຜູ້ຕາງໜ້າຢູ່ຫວຽດນາມ ແລະເກັບຂໍ້ມູນໃນປະເທດອີກດ້ວຍ.

ຂໍ້ກຳນົດດັ່ງກ່າວ ເປັນສ່ວນໜຶ່ງຂອງກົດໝາຍວ່າດ້ວຍຄວາມປອດໄພທາງອິນເຕີເນັດ ທີ່ໄດ້ຖືກປະກາດໃນປີ 2018, ບັງຄັບໃຫ້ Facebook ແລະ Google ລຶບຂໍ້ຄວາມທີ່ຖືວ່າເປັນໄພຂົ່ມຂູ່ຕໍ່ຄວາມປອດໄພແຫ່ງຊາດພາຍໃນ 24 ຊົ່ວໂມງ.




# ວິທີເຮັດວຽກ

## ພາກທີ 3

## ພະຍາດເປັນແຕ່ປາກ (ຕໍ່)

ຕົວຢ່າງ: ແທນທີ່ຈະເວົ້າຊາວໜຸ່ມຍິງ ກໍຍັງມັກເວົ້າ "ຢຸວະນາລີ" ຊໍ້າພັດບໍ່ເວົ້າຖືກຕາມນັ້ນ ເລີຍໄປເວົ້າວ່າ "ສຸວັນນາລີ", ແທນທີ່ຈະເວົ້າລາພັກການ ຊໍ້າພັດມັກໄປເວົ້າ "ແປກນີ້ຊິງ" ຍ້ອນເວົ້າບໍ່ຖືກເລີຍໄປເວົ້າວ່າ: "ໄປມີຊອງ" ຄວາມເວົ້າໃນທຳນອງນີ້ມີຫຼາຍທີ່ສຸດ, ພວກເຮົາມັກຍົກເອົາມາເວົ້າ ເພື່ອສະແດງວ່າໂຕເວົ້າຄວາມສູງ ຫຼື ປາກພາສາຕ່າງປະເທດໄດ້ ຖືວ່າເປັນກຽດ ເວົ້າດັ່ງນັ້ນມັນຄືວ່າຫາເລື່ອງມາເວົ້າເຢີ້ຍກັນ, ແຕ່ມັນບໍ່ແມ່ນການເຢີ້ຍ ມັນແມ່ນການມີແທ້ຢ່າງບໍ່ມີຜົນດີໃຫ້ແກ່ວຽກການ ແລະ ແກ່ປະເທດຊາດບ້ານເມືອງ ພະຍາດມັກເວົ້າຄວາມສູງ ແລະ ຄວາມຕ່າງປະເທດນີ້ ມັກມາຈາກຄວາມໂງ່ ຍ້ອນວ່າບໍ່ຮູ້ພາສາຂອງຕົນເອງ ຫຼື ຍ້ອນວ່າຄວາມອວດອົ່ງ, ຖືພາສາອື່ນສູງກວ່າພາສາຕົນເອງ.

**2. ວິທີການແກ້ໄຂພະຍາດເປັນແຕ່ປາກ:**

ຂ້າງເທິງນີ້ ພວກເຮົາໄດ້ບັນຍາຍເລື່ອງພະຍາດເປັນແຕ່ປາກຫຼາຍຢ່າງພໍຄວນ, ພະນັກງານແຕ່ລະຄົນ, ສະມາຊິກແຕ່ລະຄົນ ຕ້ອງອອກແຮງແກ້ໄຂປ່ຽນແປງພະຍາດຕົວນີ້ ບໍ່ດັ່ງນັ້ນ ຈະມີການເສຍຫາຍໃຫ້ແກ່ວຽກງານຂອງພັກ. ຕໍ່ໄປແມ່ນຕຳລາຢາແກ້ພະຍາດເປັນແຕ່ປາກ ທຸກຄົນຕ້ອງເຂົ້າໃຈ ຕ້ອງຈື່ຈຳ ແລະ ຕ້ອງປະຕິບັດຕາມ.

1. ຕ້ອງຮຽນວິທີປາກເວົ້າຂອງປະຊາຊົນ, ຢ່າເວົ້າຕາມແບບອ່ານປຶ້ມບັນຍາຍ. ແຕ່ລະແນວຄິດ ແຕ່ລະຄຳເວົ້າ ແຕ່ລະຕົວໜັງສືທີ່ຂຽນ ຕ້ອງສະແດງເຖິງຄວາມນຶກຄິດ ແລະ ນຳໃຈມຸ່ງມາດປາຖະໜາຂອງປະຊາຊົນຢ່າງຈະແຈ້ງ.

2. ຕ້ອງໃຊ້ຄວາມເວົ້າ ແລະ ຍົກຕົວຢ່າງອັນງ່າຍໆ ຖືກແທດກັບຄວາມຈິງ ແລະ ເຂົ້າໃຈງ່າຍຢູ່ສະເໝີ.

ອ່ານຕໍ່ສະບັບໜ້າ...

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ບົດຮຽນກ່ຽວກັບການທ່ອງທ່ຽວສີຂຽວ ແລະ ຍືນຍົງ

ພົບກັນອາທິດລະ 1 ຄັ້ງ ກັບຄໍລໍ້າ "ເບິ່ງໄວ້ໄດ້ບົດຮຽນ" ເຊິ່ງມື້ນີ້ ມີບົດຮຽນກ່ຽວກັບການທ່ອງທ່ຽວສີຂຽວ ແລະ ຍືນຍົງ ມີຄວາມໝາຍວ່າ ການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ແລະ ບໍ່ບົກແຫ້ງນີ້ເອງ. ໃນປັດຈຸບັນ ຄຳວ່າ "ສີຂຽວ" ໄດ້ຖືກນຳໃຊ້ຢ່າງຟຸມເຟືອຍ ແຕ່ກໍມີຄວາມຈຳເປັນທ່າມກາງສະພາບດິນຟ້າອາກາດມີການປ່ຽນແປງຢ່າງໄວວາ ຈົນເກີດສະພາບໂລກຮ້ອນຍ້ອນໄພພິບັດທາງທຳມະຊາດ ແຕ່ສຳຄັນກວ່ານັ້ນ ແມ່ນຍ້ອນການກະທຳທີ່ໄຮ້ຄວາມຮັບຜິດຊອບຂອງມະນຸດເຮົາເອງຫັ້ນລະ.

ໃນທ້າຍເດືອນທັນວາ 2022 ຢູ່**ຫວຽດນາມ** ໄດ້ມີກອງປະຊຸມຄັ້ງສຳຄັນ ທີ່ລົງເລິກເປົ້າໝາຍພັດທະນາການທ່ອງທ່ຽວສີຂຽວ ໂດຍມີທ່ານ ນາຍົກລັດຖະມົນຕີ ຟາມມິງຈິງ ເຂົ້າຮ່ວມ. ໃນຄຳເຫັນຕໍ່ກອງປະຊຸມ, ທ່ານນາຍົກໄດ້ເນັ້ນແລ້ວເນັ້ນອີກວ່າ ການພັດທະນາການທ່ອງທ່ຽວສີຂຽວແບບຍືນຍົງນັ້ນ ແມ່ນເປົ້າໝາຍບຸລິມະສິດ ໃນການສົ່ງເສີມອຸດສາຫະກຳທ່ອງທ່ຽວຂອງຫວຽດນາມ ແນໃສ່ດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ຢາກເຮັດໄດ້ຄືແນວນັ້ນ, ທ່ານ ນາຍົກໄດ້ສະເໜີ 3 ທິດທາງໃຫຍ່ໆ ຄື: 1. ຕ້ອງປັບປຸງຂະແໜງການທ່ອງທ່ຽວ ຕາມທິດເພີ່ມທະວີການເຊື່ອມຕໍ່ລະຫວ່າງເຂດ ແລະ ພາກ ຢ່າງຄົບຊຸດ ແລະ ຍືນຍົງ 2 .ເຊື່ອມໂຍງການທ່ອງທ່ຽວຫວຽດນາມເຂົ້າກັບສາກົນ 3. ພັດທະນາ ແລະ ກຳນົດເຄື່ອງໝາຍການຄ້າການທ່ອງທ່ຽວແຫ່ງຊາດ ໂດຍຕິດພັນກັບປະຫວັດສາດ, ມູນເຊື້ອ ແລະ ສີສັນວັດທະນະທຳທີ່ເປັນອັນສະເພາະຂອງຫວຽດນາມ.

**ຢູ່ກຳປູເຈຍ,** ນັບແຕ່ປີ 2013 ເປັນຕົ້ນມາ, ທາງກະຊວງທ່ອງທ່ຽວ ແລະ ຄະນະກຳມາທິການຄຸ້ມຄອງຕົວເມືອງ ແລະ ນະຄອນສະອາດຂອງກຳປູເຈຍ ໄດ້ກຳນົດເອົາວັນທີ 27 ກຸມພາ ຂອງແຕ່ລະປີ ເປັນວັນ "ນະຄອນສະອາດ" ແນໃສ່ເພື່ອສ້າງຂະບວນການເພື່ອປຸກຈິດສຳນຶກ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ. ໜຶ່ງໃນບັນດາກິດຈະກຳເຄື່ອນໄຫວຂອງວັນດັ່ງກ່າວນັ້ນກໍຄືການຈັດຕັ້ງປັ້ນແຂ່ງຂັນ ພາຍໃຕ້ຫົວຂໍ້ "ທ່ອງທ່ຽວສີຂຽວ" ແລະ ການໃຫ້ "ບໍລິການຍອດຢ້ຽມ" ທາງການໃຫ້ຄຳນິຍາມການ "ທ່ອງທ່ຽວສີຂຽວ" ວ່າແມ່ນການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ສ່ວນການໃຫ້ "ບໍລິການຍອດຢ້ຽມ" ນັ້ນໝາຍເຖິງການບໍລິການທີ່ເຮັດໃຫ້ບັນດານັກທ່ອງທ່ຽວປະທັບໃຈຕໍ່ຄຸນະພາບໃນການບໍລິການ ດ້ວຍໄມຕີຈິດມິດຕະພາບທີ່ພວກເຂົາໄດ້ຮັບ. ຂ່າວໃຫ້ຮູ້ວ່າ ທາງກະຊວງທ່ອງທ່ຽວກຳປູເຈຍ ໄດ້ຮຽກຮ້ອງໃຫ້ການນຳຂອງບັນດາແຂວງ ແລະ ນະຄອນ ເຂົ້າຮ່ວມປັ້ນແຂ່ງຂັນໃນວັນ "ນະຄອນສະອາດ" ຢ່າງຕັ້ງໜ້າ ໂດຍນຳໃຊ້ທ່າແຮງ ແລະ ເງື່ອນໄຂອັນຈຳເປັນຂອງພວກເຂົາ. ແຂວງທີ່ໂດດເດັ່ນ ແລະ ຄອງອັນດັບຫົວແຖວມາຕະຫຼອດໃນປັ້ນແຂ່ງຂັນແຕ່ລະປີ ນັ້ນແມ່ນແຂວງ ແຄມຝັ່ງທະເລຊື່ວ່າ ແຂວງ ເກັບ (Kep) ທ່ານ ເກນສັດທາ, ເຈົ້າແຂວງຂອງແຂວງນີ້ ເປັນຄົນມີຫົວຄິດປະດິດສ້າງ ກ້າເຮັດກ້າທຳ ບໍ່ລໍຖ້າແຕ່ຄຳສັ່ງຈາກຂັ້ນເທິງ ແລະ ບໍ່ລໍຖ້າຮອດວັນ "ນະຄອນສະອາດ" ຈຶ່ງເຮັດຄວາມສະອາດ. ໃນປີ 2017 ແຂວງ Kep ໄດ້ຮັບລາງວັນເມືອງທ່ອງທ່ຽວສະອາດຈາກອາຊຽນ.

**ຢູ່ບາຫຼີ,** ນະຄອນເກາະທ່ອງທ່ຽວຊັ້ນຍອດ ຂອງອິນໂດເນເຊຍນັ້ນ ກໍເນັ້ນການພັດທະນາການທ່ອງທ່ຽວສີຂຽວ ແລະ ຍືນຍົງ. ໃນຄວາມໝາຍ "ສີຂຽວ" ນັ້ນກໍຄື ການຮັກສາຄວາມສະອາດ ການຮັກສາສິ່ງແວດລ້ອມຕາມຊາຍຝັ່ງທະເລ ແລະ ນ່ານນ້ຳໃຫ້ສົດໃສ ໄຮ້ມົນລະພິດ. ສ່ວນຄຳວ່າ "ຍືນຍົງ" ໝາຍເຖິງເຮັດໃຫ້ການທ່ອງທ່ຽວ ຕິດພັນກັບວິຖີຊີວິດທາງເສດຖະກິດ ແລະ ວັດທະນະທຳຂອງຊາວທ້ອງຖິ່ນ ກໍຄືຄົນພາຍໃນປະເທດຕະຫຼອດໄປ ໂດຍບໍ່ມີວັນບົກແຫ້ງ ຫຼື ເສື່ອມໂຊມ.

ຢູ່ເກາະທ່ອງທ່ຽວແຫ່ງນີ້ ທາງການໄດ້ເອົາໃຈໃສ່ຄວາມຂຽວຂອງຕົວເມືອງ, ເຊັ່ນໃນເຂດທ່ອງທ່ຽວໄດ້ມີການຫ້າມປຸກຕຶກອາຄານສູງກວ່າປາຍພ້າວ, ຫ້າມໃຊ້ຖົງປລາສະຕິກທີ່ໃຊ້ພຽງຄັ້ງດຽວ, ສົ່ງເສີມການໃຊ້ໃບຕອງ, ໃບພ້າວເພື່ອຫຸ້ມຫໍ່ສິນຄ້າກໍຄືອາຫານການກິນໃຫ້ລູກຄ້າ, ເປີດປັ້ນເຮັດອະນາໄມຕາມແຄມຝັ່ງຫາດເປັນປະຈຳ, ສົ່ງເສີມ ການປູກການລ້ຽງແບບອິນຊີ ເພື່ອສ້າງລາຍຮັບໃຫ້ຊາວກະສິກອນໃນທ້ອງຖິ່ນ. ເລີ່ມແຕ່ທ້າຍປີ 2019 ເປັນຕົ້ນມາ, ທາງການຂອງເມືອງ ບາຫຼີ ໄດ້ອອກຂໍ້ກຳນົດໃຫ້ບັນດາຮ້ານສັບພະສິນຄ້າພາຍໃນເກາະໃຫ້ບໍລິການຜະລິດຕະພັນໃນທ້ອງຖິ່ນຫຼາຍຂຶ້ນ, ໂຮງແຮມ ແລະ ຮ້ານອາຫານຕ້ອງໃຊ້ຜະລິດຕະພັນພາຍໃນບໍ່ໃຫ້ຫຼຸດ 30%, ການປຸງອາຫານກໍຕ້ອງໃຊ້ເຄື່ອງປຸງຂອງທ້ອງຖິ່ນບໍ່ຫຼຸດ 10% ບໍລິມາດຜະລິດຕະພັນກະສິກຳ ແລະ ປະເພດຊີ້ນ ທີ່ຂາຍໃນບັນດາຮ້ານສັບພະສິນຄ້າຈຳນວນບໍ່ຫລຸດ 60% ຕ້ອງມາຈາກການລ້ຽງເອງປູກເອງ ຂອງຄົນພາຍໃນເກາະ, ສ່ວນປາ ແລະ ເຄື່ອງທະເລຈຳນວນ 30% ຕ້ອງມາຈາກທ້ອງຖິ່ນເກາະ ບາຫຼີ ນັ້ນເອງ. ເຮັດໄດ້ແນວນັ້ນ ການທ່ອງທ່ຽວຈຶ່ງຈະຍືນຍົງ, ເພາະຄົນທ້ອງຖິ່ນມີສ່ວນແບ່ງໃນຜົນປະໂຫຍດຢ່າງແທ້ຈິງ.



## ປະສົບການດຽວກັນ

*# ບ່າວກະບື*

**ມີ**ທໍ່ນ້ຳປະປາແຕກຢູ່ເຮືອນທ່ານໝໍ. ທ່ານໝໍໂທເອີ້ນຊ່າງແປງທໍ່ນ້ຳ. ພໍມາຮອດ, ນາຍຊ່າງ ກໍໄຂເອົາເຄື່ອງມືລາວອອກ ແລ້ວລົງມືເຮັດວຽກສະເພາະແປງທໍ່ຂອງລາວເປັນເວລາສັ້ນໆ. ເຂົາຍື່ນໃບບິນຄ່າມື ເປັນເງິນ 600 ໂດລາ ໃຫ້ທ່ານໝໍ. ທ່ານໝໍຮ້ອງຂຶ້ນອອກມາວ່າ: " ຢ່າຫົວນ່ຳ, ຂ້ອຍເອງເປັນດອກເຕີ້ນທັງແຕ່ກໍຍັງບໍ່ໄດ້ເງິນຫຼາຍປານນີ້ຊ້ຳ ! ".

ຊ່າງແປງທໍ່ຕອບຄ່ອຍໆອອກມາວ່າ:

"ຕອນຂ້ອຍເປັນດອກເຕີ້ຄືເຈົ້າ ຂ້ອຍກໍບໍ່ໄດ້ເງິນຫຼາຍປານນີ້ຄືກັນຫັ້ນລະ ".

## SAME EXPERIENCE

*# BAOKBU*

A pipe burst in a doctor's house. He called a plumber. The plumber arrived, unpacked his tool, did plumber-type things for a while, and handed the doctor a bill for 600$.

The doctor exclaimed, " This is ridiculous !. I don't even make that much as a doctor !"

The pluamber quietly answered, "Neither did I when I was a doctor".




ປ້າຍລົດເມມີໄວ້ຈອດລົດເມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊີ້ນຳທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ກຸກິກ ບຸດດາໄຊ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ